ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ**
**Lao Chamber of Professional Accountants and Auditors**

# ບົດລາຍງານ

## ການເຄື່ອນໄຫວວຽກງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ
## ມັງກອນ (1) - ທັນວາ (12) 2022

ມີນາ 2023

# ສາລະບານ


**I. ສະຖານະພາບລວມ ............ 1**

1.1 ປະຫວັດຄວາມເປັນມາຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ............ 1

1.2 ພາລະບົດບາດຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ............ 1

1.3 ພັນທະຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ............ 2

1.4 ຂອບເຂດການເຄື່ອນໄຫວຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ............ 2

1.5 ຫຼັກການກ່ຽວກັບການເຄື່ອນໄຫວຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ............ 2

1.6 ໜ້າທີ່ຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ............ 3

**II. ສະພາບການຈັດຕັ້ງປະຕິບັດວຽກງານໃນປີ 2022 ............ 4**

2.1 ວຽກງານຈັດຕັ້ງຄະນະບໍລິຫານງານ ແລະ ພະນັກງານ ............ 4

2.2 ດ້ານການຄົ້ນຄວ້ານິຕິກຳພາຍໃນ: ............ 6

2.3 ວຽກງານເຄື່ອນໄຫວວິຊາສະເພາະ ............ 6

**III. ຂໍ້ສະດວກ, ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ............ 33**

3.1 ຂໍ້ສະດວກ ............ 33

3.2 ຂໍ້ຄົງຄ້າງ ............ 33

3.3 ບົດຮຽນທີ່ຖອດຖອນໄດ້ ............ 33

**IV. ທິດທາງແຜນການໃນການປັບປຸງ ປີ 2023 ............ 33**

**☑ ເອກະສານລາຍງານການເງິນສຳລັບທີ່ສິ້ນສຸດວັນທີ 31 ທັນວາ 2022 ............ 35**

# I. ສະຖານະພາບລວມ

## 1.1 ປະຫວັດຄວາມເປັນມາຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ອົງການຈັດຕັ້ງວິຊາຊີບການບັນຊີ ຊຶ່ງຢູ່ພາຍໃຕ້ການຊີ້ນຳ ຂອງກະຊວງການເງິນ ຖືກສ້າງຕັ້ງຂຶ້ນ ໃນປີ 1998 ຕາມຂໍ້ຕົກລົງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0722/ກງ ເພື່ອປະຕິບັດຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 161/ນຍ ໃນປີ 1996. ຈາກນັ້ນ ໄດ້ປ່ຽນຊື່ ເປັນສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 1004/ກງ ລົງວັນທີ 07 ເມສາ 2015 ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການກວດສອບອິດສະລະປີ 2014 ແລະ ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0994/ກງ, ລົງວັນທີ 07 ເມສາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໄດ້ເຂົ້າເປັນສະມາຊິກຂອງສະຫະພັນນັກບັນຊີອາຊຽນ (AFA), ຊຶ່ງປັດຈຸບັນປະເທດໄທເປັນປະທານ. ສວ-ບກສ ໄດ້ເຂົ້າເປັນສະມາຊິກສົມທົບຂອງ ສະຫະພັນນັກບັນຊີສາກົນ (IFAC) ຊຶ່ງໄດ້ຖືກຮັບຮອງເປັນທາງການໃນວັນທີ 13 ພະຈິກ 2019 ຊຶ່ງມີຂໍ້ຜູກມັດປະຕິບັດແຜນການດຳເນີນງານ ທີ່ສອດຄ່ອງກັບ 07 ພັນທະພື້ນຕໍ່ທີ່ຖືກກຳນົດໂດຍສະຫະພັນນັກບັນຊີສາກົນ.

## 1.2 ພາລະບົດບາດຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນການຈັດຕັ້ງວິຊາຊີບນັກບັນຊີ ແລະ ນັກກວດສອບ ຢູ່ ສປປ ລາວ ດ້ວຍຈຸດປະສົງສ້າງຕັ້ງຂຶ້ນເພື່ອ:

- ເຕົ້າໂຮມບັນດາບຸກຄົນ, ຫົວໜ່ວຍວິຊາຊີບການບັນຊີທີ່ເຄື່ອນໄຫວວຽກງານ ກ່ຽວກັບ ການບັນຊີ ແລະ ການກວດສອບ, ແລກປ່ຽນບົດຮຽນ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ແນໃສ່ຮັບໃຊ້ສິດຜົນປະໂຫຍດ ອັນຊອບທຳຂອງສາທາລະນະຊົນດ້ວຍການຄຸ້ມຄອງທີ່ດີ ແລະ ປະຕິບັດຈັນຍາບັນ, ມາດຕະຖານດ້ານການລາຍງານການເງິນ, ມາດຕະຖານວິຊາຊີບດ້ານກວດສອບ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
- ສະໜັບສະໜູນ ແລະ ຊຸກຍູ້ສົ່ງເສີມ ອົງການຄຸ້ມຄອງລັດ ແລະ ພາກສ່ວນທີ່ມີສ່ວນກ່ຽວຂ້ອງໃນການປັບປຸງ, ພັດທະນາວິຊາຊີບການບັນຊີໃຫ້ມີຄຸນນະພາບ ກ້າວທັນກັບລະດັບພາກພື້ນ ແລະ ສາກົນ ແລະ ໃຫ້ສັງຄົມເຫັນໄດ້ເຖິງບົດບາດ ແລະ ຄວາມສຳຄັນຂອງວິຊາການບັນຊີ ແລະ ກວດສອບ;
- ປົກປ້ອງກຽດຊື່ສຽງ ແລະ ຍົກສູງຈັນຍາບັນວິຊາຊີບສຳລັບນັກວິຊາຊີບການບັນຊີ ແລະ ກວດສອບ, ຊ່ວຍຮັບປະກັນການບໍລິການດ້ານບັນຊີ ແລະ ກວດສອບແກ່ສັງຄົມໃຫ້ມີຄວາມຖືກຕ້ອງ, ໂປ່ງໃສ, ແລະ ມີປະ ສິດທິພາບ ໂດຍການຈັດຕັ້ງປະຕິບັດມາດຕະຖານດ້ານວິຊາຊີບ ແລະ ຈັນຍາບັນ ທີ່ສອດຄ່ອງກັບມາດຕະຖານສາກົນ ແລະ ການປະຕິບັດທີ່ດີທີ່ສຸດ;
- ພັດທະນາວິຊາຊີບການບັນຊີ ແລະ ກວດສອບ ໂດຍຮ່ວມກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ ຈັດຝຶກອົບຮົມ, ຍົກລະດັບ, ຖ່າຍທອດຄວາມຮູ້ ແລະ ປະສົບການ ກ່ຽວກັບ ການບັນຊີ ແລະ ກວດສອບ ໃຫ້ແກ່ສະມາຊິກຂອງຕົນ ແລະ ຜູ້ທີ່ມີຄວາມຕ້ອງການຕາມເນື້ອໃນ, ຫຼັກສູດ, ໂຄງການ ແລະ ແຜນງານທີ່ກະຊວງການເງິນຮັບຮອງ ແນໃສ່ຕອບສະໜອງການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ;
- ທົບທວນ ແລະ ຕິດຕາມກວດກາການປະຕິບັດລະບຽບກົດໝາຍຂອງສະມາຊິກຂອງຕົນ, ສະເໜີກະຊວງການເງິນປະຕິບັດນະໂຍບາຍຍ້ອງຍໍ ແລະ ວິໄນໃຫ້ແກ່ສະມາຊິກ ແລະ ພະນັກງານຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;

- ຈັດຕັ້ງປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງກັບການບັນຊີ ແລະ ກວດສອບ ແລະ ລະບຽບຂອງ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງ ແລະ ຊີ້ນຳຂອງກະຊວງການເງິນ;
- ມີພາລະກິດຮັບໃຊ້ຜົນປະໂຫຍດສາທາລະນະ, ສ້າງຄວາມເຂັ້ມແຂງໃຫ້ແກ່ວິຊາຊີບການບັນຊີ ໃນ ສປປ ລາວ ແລະ ປະກອບສ່ວນໃນການພັດທະນາເສດຖະກິດແຫ່ງຊາດໃຫ້ເຂັ້ມແຂງດ້ວຍການສ້າງ ແລະ ສົ່ງເສີມການຮັບຮອງມາດຕະຖານດ້ານວິຊາຊີບທີ່ມີຄຸນນະພາບສູງ ແລະ ສະແດງຄຳເຫັນຂອງຕົນຕໍ່ກັບບັນຫາທີ່ພົວພັນກັບຜົນປະໂຫຍດສາທາລະນະໃນລາວ ເມື່ອກ່ຽວຂ້ອງກັບປະສົບການດ້ານວິຊາຊີບຂອງຕົນ.

### 1.3 ພັນທະຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ມີພັນທະດັ່ງນີ້:

- ລາຍງານປະຈຳເດືອນ, ໄຕມາດ, ປະຈຳປີ ໃຫ້ແກ່ສະມາຊິກຕົນ, ກົມຄຸ້ມຄອງການບັນຊີ ກະຊວງການເງິນ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງຮັບຊາບກ່ຽວກັບສະພາບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແລະ ສະພາບດ້ານການເງິນ - ງົບປະມານຂອງຕົນ;
- ຈົດທະບຽນ, ຄຸ້ມຄອງ ແລະ ບໍລິການຮັບໃຊ້ສະມາຊິກຂອງຕົນ ໃນຮູບການຍົກລະດັບຄວາມຮູ້, ຄວາມ ສາມາດ ແລະ ຄວາມຊຳນານງານ ດ້ານວິຊາຊີບການບັນຊີ ແລະ ກວດສອບ;
- ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຄັ່ງຄັດ;
- ປະເມີນຜົນ ແລະ ຕິດຕາມກວດກາການເຄື່ອນໄຫວສະມາຊິກ.

### 1.4 ຂອບເຂດການເຄື່ອນໄຫວຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ຂອບເຂດການເຄື່ອນໄຫວຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແມ່ນເຄື່ອນໄຫວຢູ່ໃນຂົງເຂດ ວິຊາຊີບການບັນຊີ ແລະ ກວດສອບ ຕາມລະບຽບກົດໝາຍ.

### 1.5 ຫຼັກການກ່ຽວກັບການເຄື່ອນໄຫວຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເຄື່ອນໄຫວຕາມຫຼັກການດັ່ງນີ້:

- ປະຕິບັດຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງກັບວິຊາຊີບການບັນຊີ ແລະ ກວດສອບເພື່ອຍົກສູງຄຸນນະພາບດ້ານວິຊາຊີບການບັນຊີ ແລະ ກວດສອບ;
- ເຄື່ອນໄຫວຕາມກົດລະບຽບຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ທິດທາງການປັບປຸງວຽກງານບັນຊີ ແລະ ກວດສອບ ຂອງກະຊວງການເງິນ;
- ຄຸ້ມຄອງ ແລະ ຮັບຜິດຊອບທຸກການເຄື່ອນໄຫວຂອງຕົນຕໍ່ໜ້າລະບຽບກົດໝາຍ;
- ກຸ້ມຕົນເອງທາງດ້ານການເງິນ ໂດຍການເກັບລາຍຮັບໃຫ້ພຽງພໍເພື່ອກວມເອົາຄ່າໃຊ້ຈ່າຍໃນການດຳເນີນງານທັງໝົດ ແລະ ສະໜອງທຶນທີ່ຈຳເປັນໃນການລົງທຶນເພື່ອການພັດທະນາຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
- ໂປ່ງໃສ, ເປີດເຜີຍ, ມີປະຊາທິປະໄຕ ແລະ ມີຄວາມສະເໝີພາບ;
- ເຄື່ອນໄຫວວຽກງານໃນຂອບເຂດທົ່ວປະເທດ ແລະ ພົວພັນຮ່ວມມືກັບອົງການຈັດຕັ້ງວິຊາຊີບການບັນຊີ ແລະ ກວດສອບຂອງພາກພື້ນ ແລະ ສາກົນ ຕາມການຕົກລົງເຫັນດີຂອງ ກະຊວງການເງິນ.

## 1.6 ໜ້າທີ່ຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ມີໜ້າທີ່ໃນການສົ່ງເສີມຈິດສຳນຶກຂອງສະມາຊິກໃຫ້ມີໜ້າທີ່ເສີມສ້າງພຶດຕິກຳດ້ານວິຊາຊີບ ແລະ ສ້າງຂີດຄວາມສາມາດໃນການສົ່ງເສີມມາດຕະຖານດ້ານວິຊາຊີບ ໃນການປະກອບອາຊີບໃຫ້ມີຄຸນນະພາບສູງ, ຂະຫຍາຍຂອບເຂດການໃຫ້ບໍລິການດ້ານວິຊາຊີບ ແລະ ຮັບໃຊ້ຜົນປະໂຫຍດສາທາລະນະ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕ້ອງປະຕິບັດໜ້າທີ່ຕໍ່ໄປນີ້:

- ຮັບເອົາແຕ່ບຸກຄົນ ແລະ ນິຕິບຸກຄົນ ທີ່ປະຕິບັດສອດຄ່ອງກັບລະບຽບກົດໝາຍ ແລະ ມຸ່ງໝັ້ນປະຕິບັດຂໍ້ຜູກພັນໃນການຮັບໃຊ້ຜົນປະໂຫຍດສາທາລະນະດ້ວຍການຮັກສາມາດຕະຖານຄວາມສາມາດດ້ານວິຊາຊີບ ແລະ ຄວາມສັດຊື່ບໍລິສຸດໃຫ້ມີຄຸນນະພາບສູງ;
- ອອກແບບ ແລະ ຈັດຕັ້ງປະຕິບັດຫຼັກສູດວິຊາຊີບ ທີ່ສອດຄ່ອງກັບລະບຽບກົດໝາຍ, IES ແລະ ການປະຕິບັດທີ່ດີທີ່ສຸດ ພາຍໃຕ້ການຊີ້ນຳຂອງ ກະຊວງການເງິນ;
- ພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍ ດ້ານການຍົກລະດັບວິຊາຊີບແບບຕໍ່ເນື່ອງ ແລະ ຕິດຕາມກວດກາຄວາມຄືບໜ້າໃນການປະຕິບັດ;
- ອອກແບບ ແລະ ສະໜອງການຝຶກອົບຮົມ ແລະ ຫຼັກສູດຝຶກອົບຮົມໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ເພື່ອຊ່ວຍໃຫ້ປະຕິບັດພັນທະດ້ານບັນຊີດ້ວຍການຈັດຊຸດຝຶກອົບຮົມ ພາຍໃຕ້ການຮ່ວມມືກັບກົມຄຸ້ມຄອງການບັນຊີກະຊວງການເງິນ;
- ສົ່ງເສີມວິຊາຊີບການບັນຊີ ແລະ ກວດສອບ ໃຫ້ແກ່ອົງການຄຸ້ມຄອງທີ່ກ່ຽວຂ້ອງກັບລະບຽບກົດໝາຍ ດ້ານບັນຊີ ແລະ ກວດສອບ;
- ສ້າງຕຳລາການຝຶກອົບຮົມ ກ່ຽວກັບ ຈັນຍາບັນສຳລັບນັກວິຊາຊີບການບັນຊີ, ອອກແບບ ແລະ ຈັດຕັ້ງປະຕິບັດຫຼັກສູດຝຶກອົບຮົມ ແລະ ຄຸ້ມຄອງສະມາຊິກຕົນ ເພື່ອໃຫ້ປະຕິບັດສອດຄ່ອງກັບຈັນຍາບັນ;
- ເສີມສ້າງຄຸນນະພາບ ແລະ ຂະຫຍາຍຂອບເຂດການບໍລິການຂອງນັກວິຊາຊີບການບັນຊີ;
- ເຂົ້າຮ່ວມສຳມະນາ ແລະ ກອງປະຊຸມໃນຫົວຂໍ້ທີ່ກ່ຽວຂ້ອງກັບບັນຫາໃນການພັດທະນາກົດຈະກຳດ້ານບັນຊີ ແລະ ກວດສອບ ໃນລະດັບຊາດ ແລະ ສາກົນ;
- ຄຸ້ມຄອງການປະຕິບັດພັນທະດ້ານການຍົກລະດັບວິຊາຊີບ, ການບຳລຸງຮັກສາສະມາຊິກ, ການເຄື່ອນໄຫວປະກອບອາຊີບຂອງສະມາຊິກ;
- ພົວພັນຮ່ວມມືກັບອົງການຈັດຕັ້ງ ແລະ ສະຖາບັນວິຊາຊີບການບັນຊີຂອງບັນດາປະເທດ, ພາກພື້ນ ແລະ ສາກົນຕາມການຕົກລົງເຫັນດີຂອງ ກະຊວງການເງິນ;
- ຍາດແຍ່ງເອົາການຮັບຮູ້ຂອງສາກົນ ໂດຍການກາຍເປັນສະມາຊິກສົມບູນຂອງ (IFAC) ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ;
- ພັດທະນາຂີດຄວາມສາມາດຂອງສະມາຊິກຕົນ ດ້ວຍການປັບປຸງຜົນການດຳເນີນງານ ໃນການຈັດຕັ້ງປະຕິ\ບັດມາດຕະຖານການລາຍງານການເງິນ, ມາດຕະຖານດ້ານວິຊາຊີບ ແລະ ລະບຽບການທີ່ກ່ຽວຂ້ອງຕາມການມອບໝາຍຂອງກະຊວງການເງິນ ແລະ ກວດກາຜົນການດຳເນີນງານຂອງສະມາຊິກຕົນ;
- ອອກແບບ ແລະ ຈັດຕັ້ງປະຕິບັດໜ້າທີ່ອື່ນ ທີ່ກຳນົດໄວ້ໃນລະບຽບການອື່ນຂອງ ສອ-ບກລ.

## II. ສະພາບການຈັດຕັ້ງປະຕິບັດວຽກງານໃນປີ 2022

### 2.1 ວຽກງານຈັດຕັ້ງຄະນະບໍລິຫານງານ ແລະ ພະນັກງານ

2.1.1 ປັດຈຸບັນມີພະນັກງານປະຈຳທັງໝົດ 09 ທ່ານ, ຍິງ 04 ທ່ານ;

2.1.2 ແຕ່ງຕັ້ງ ຄະນະບໍລິຫານງານຈຳນວນ 09 ທ່ານ, ໃນນັ້ນປະທານ 01 ທ່ານ, ຮອງປະທານ 02 ທ່ານ ແລະ ກຳມະ ການຄະນະບໍລິຫານງານ 06 ທ່ານ (ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 1264/ກງ, ລົງວັນທີ 10 ພຶດສະພາ 2022).

2.1.3 ສຳເລັດການແຕ່ງຕັ້ງ ຄະນະກຳມະການຄົ້ນຄວ້າມາດຕະຖານ ຂໍ້ຕົກລົງ ສະບັບເລກທີ 220/ສວ-ບກລ ລົງວັນທີ 21 ພະຈິກ 2022;

2.1.4 ສຳເລັດການແຕ່ງຕັ້ງ ຄະນະກຳມະການແຕ່ງຕັ້ງບຸກຄະລາກອນ ຂໍ້ຕົກລົງ ສະບັບເລກທີ 221/ສວ-ບກລ ລົງວັນທີ 21 ພະຈິກ 2022;

2.1.5 ສຳເລັດການແຕ່ງຕັ້ງ ຄະນະກຳມະການສຶກສາ ຂໍ້ຕົກລົງ ສະບັບເລກທີ 222/ສວ-ບກລ ລົງວັນທີ 21 ພະຈິກ 2022;

2.1.6 ສຳເລັດການແຕ່ງຕັ້ງ ຄະນະກຳມະການວິໄນ ຂໍ້ຕົກລົງ ສະບັບເລກທີ 223/ສວ-ບກລ ລົງວັນທີ 21 ພະຈິກ 2022;

2.1.7 ສຳເລັດການແຕ່ງຕັ້ງ ຄະນະກຳມະການຈົດທະບຽນ ຂໍ້ຕົກລົງ ສະບັບເລກທີ 224/ສວ-ບກລ ລົງວັນທີ 21 ພະຈິກ 2022.

# ໂຄງຮ່າງການຈັດຕັ້ງຂອງ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ



**2.2 ດ້ານການຄົ້ນຄວ້ານິຕິກຳພາຍໃນ:**

2.2.1 ສຳເລັດການປັບປຸງກົດລະບຽບຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເຊັນຮັບຮອງໃນວັນທີ 25 ສິງຫາ 2022;

2.2.2 ສຳເລັດລະບຽບການຄຸ້ມຄອງທີ່ປຶກສາບັນຊີ ແລະ ເຊັນຮັບຮອງນຳໃຊ້ໃນວັນ 19 ກັນຍາ 2022;

2.2.1 ສຳເລັດການປັບປຸງຂໍ້ຕົກລົງ ວ່າດ້ວຍການກຳນົດການໃຊ້ຈ່າຍງົບປະມານບໍລິຫານຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ໄດ້ເຊັນຮັບຮອງໃນ ວັນທີ 18 ເດືອນ ຕຸລາ 2022;

2.2.2 ສຳເລັດການປັບປຸງລະບຽບການຝຶກງານເປັນນັກຊ່ຽວຊານບັນຊີ ເຊັນຮັບຮອງຈັດຕັ້ງປະຕິບັດ ໃນວັນທີ 19 ສິງຫາ 2022;

2.2.3 ສຳເລັດການປັບປຸງກົດລະບຽບຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ໄດ້ເຊັນຮັບຮອງຈັດຕັ້ງປະຕິບັດ ໃນວັນທີ 25 ສິງຫາ 2022;

2.2.4 ສຳເລັດການສ້າງລະບຽບການ ກ່ຽວກັບ ການຄຸ້ມຄອງທີ່ປຶກສາບັນຊີ ແລະ ເຊັນຮັບຮອງ ໃນໃນວັນ 19 ກັນຍາ 2022;

2.2.5 ສ້າງໂຄງການພັດທະນາຫຼັກສູດວິຊາຊີບຊ່ຽວຊານບັນຊີລາວ ໃຫ້ເປັນຫຼັກສູດສະເພາະຂອງ ສວ-ບກລ, ໃຫ້ສອດຄ່ອງກັບສະພາບເສດຖະກິດ ແລະ ສັງຄົມຂອງລາວໃນປັດຈຸບັນ ແລະ ຮັບປະກັນທາງດ້ານຄຸນນະພາບໃຫ້ສອດຄ່ອງຕາມມາດຕະຖານສາກົນດ້ານການສຶກສາ ແລະ ຄາດວ່າຈະສຳເລັດ ໃນທ້າຍປີ 2023;

2.2.5.1 ໄດ້ສົມທົບກັບ ກົມຄຸ້ມຄອງການບັນຊີ ກະຊວງການເງິນ ຄົ້ນຄວ້າ ສ້າງຄູ່ມືການຈັດຕັ້ງປະຕິບັດມາດຕະຖານລາຍງານການເງິນ ສຳລັບວິສາຫະກິດທີ່ບໍ່ຮັບໃຊ້ຜົນປະໂຫຍດສາທາລະນະ ຊຶ່ງປະຈຸບັນໄດ້ສຳເລັດເບື້ອງຕົ້ນ ແລະ ພວມດຳເນີນການກວດແກ້ພາສາລາວ;

2.2.6 ຄົ້ນຄວ້າປັບປຸງລະບຽບ ການຮຽນ-ການສອນ ຫຼັກສູດ ວິຊາຊີບຊ່ຽວຊານບັນຊີລາວ ເຊັ່ນ: ຮູບແບບການຮຽນ-ການສອນ, ການຂຶ້ນຫ້ອງຮຽນ;

2.2.7 ຮ່າງລະບຽບການຍົກເວັ້ນວິຊາຮຽນສຳລັບຜູ້ທີ່ຮຽນຈົບດ້ານບັນຊີ ແລະ ກວດສອບ ແລະ ຜູ້ທີ່ສົນໃຈຢາກເຂົ້າ ຝຶກອົບຮົມຫຼັກສູດ ວິຊາຊີບຊ່ຽວຊານບັນຊີ ແລະ ຄາດວ່າຈະໃຫ້ສຳເລັດພາຍໃນເດືອນກັນຍາທີ່ຈະມາເຖິງນີ້;

2.2.8 ຮ່າງລະບຽບການຄຸ້ມຄອງສະມາຊິກ ແລະ ຄາດວ່າຈະສຳເລັດໃນທ້າຍປີ 2023.

**2.3 ວຽກງານເຄື່ອນໄຫວວິຊາສະເພາະ**

2.3.1 ວຽກງານຝຶກອົບຮົມ

❒ ຫຼັກສູດ ວິຊາຊີບຊ່ຽວຊານບັນຊີລາວ

ນັບແຕ່ປີ 2016 ຈົນເຖິງປັດຈຸບັນ, ເພື່ອໃຫ້ຫຼັກສູດວິຊາຊີບຊ່ຽວຊານບັນຊີ ຂອງ ສວ-ບກລ ສອດຄ່ອງກັບມາດຕະຖານສາກົນດ້ານການສຶກສາ, ສວ-ບກລ ໄດ້ຮ່ວມມືກັບ ACCA ຊຶ່ງເປັນໜຶ່ງໃນບັນດາ ອົງການຈັດຕັ້ງວິຊາຊີບການບັນຊີຂອງປະເທດອັງກິດ, ທີ່ໄດ້ອະນຸຍາດໃຫ້ ສວ-ບກລ ນຳໃຊ້ຫຼັກສູດ ເພື່ອພັດທະນາຫຼັກສູດນັກຊ່ຽວຊານບັນຊີຂອງລາວ, ຫຼັກສູດດັ່ງກ່າວນຳໃຊ້ໃນທົ່ວໂລກ ແລະ ສອດຄ່ອງກັບມາດຕະຖານສາກົນ, ຊຶ່ງແບ່ງອອກເປັນ 02 ລະດັບຄື: ລະດັບວິຊາພື້ນຖານ 09 ວິຊາ ແລະ ວິຊາລະດັບວິຊາຊີບ 04 ວິຊາ.

ໂດຍປົກກະຕິແລ້ວສາມາດເສັງຈົບທັງໝົດທຸກວິຊາພາຍໃນ 03 ປີ. ການຝຶກອົບຮົມແມ່ນໃຊ້ປຶ້ມຕຳລາຂອງ ACCA ເປັນພາສາອັງກິດເປັນພື້ນຖານໃນການແຕ່ງບົດສອນ ສ່ວນການສອບເສັງແມ່ນ ສວ-ບກລ ເປັນຜູ້ກະກຽມບົດສອບເສັງ ແລະ ຈັດຕັ້ງປະຕິບັດເອງ.

ໃນປີ 2022 ສວ-ບກລ ຍັງສືບຕໍ່ເຄື່ອນໄຫວວຽກງານການຝຶກອົບຮົມຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA) ຊຶ່ງມີຈຳນວນ 04 ລຸ້ນຮຽນທີ່ມີການສືບຕໍ່ຮຽນໃນປີ 2022 ຄື: ລຸ້ນທີ XIV, ລຸ້ນທີ XV, ລຸ້ນທີ XVI, ລຸ້ນທີ XVII, ຊຶ່ງລາຍລະອຽດຂອງນັກຝຶກອົບຮົມແຕ່ລະລຸ້ນມີດັ່ງລຸ່ມນີ້:

ຕາຕະລາງ 01: ນັກຝຶກອົບຮົມລຸ້ນທີ XIV

| ພາກສ່ວນ | ຈຳນວນ ນັກຝຶກອົບຮົມ | ຊາຍ | ຍິງ |
|---|---|---|---|
| ພະນັກງານສັງກັດລັດ-ກະຊວງການເງິນ | 4 | 2 | 2 |
| ທະນາຄານແຫ່ງ ສປປ ລາວ | 0 | 0 | 0 |
| ພະນັກງານສັງກັດອົງກອນລັດອື່ນໆ | 0 | 0 | 0 |
| ສະຖາບັນການສຶກສາຕ່າງໆ | 0 | 0 | 0 |
| ບໍລິສັດ ບໍລິການບັນຊີ ແລະ ກວດສອບ ພາຍໃນປະເທດ | 13 | 9 | 4 |
| ບໍລິສັດ ບໍລິການກວດສອບບັນຊີ ຕ່າງປະເທດ | 15 | 7 | 8 |
| ບໍລິສັດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ | 11 | 4 | 7 |
| ບໍລິສັດທົ່ວໄປ | 65 | 35 | 30 |
| ລວມ | 108 | 57 | 51 |

ຕາຕະລາງ 02: ນັກຝຶກອົບຮົມລຸ້ນທີ XV

| ພາກສ່ວນ | ຈຳນວນ ນັກຝຶກອົບຮົມ | ຊາຍ | ຍິງ |
|---|---|---|---|
| ພະນັກງານສັງກັດລັດ-ກະຊວງການເງິນ | 10 | 5 | 5 |
| ທະນາຄານແຫ່ງ ສປປ ລາວ | 4 | 2 | 2 |
| ພະນັກງານສັງກັດອົງກອນລັດອື່ນໆ | 1 | 0 | 1 |
| ສະຖາບັນການສຶກສາຕ່າງໆ | 1 | 0 | 1 |
| ບໍລິສັດ ບໍລິການບັນຊີ ແລະ ກວດສອບ ພາຍໃນປະເທດ | 14 | 6 | 8 |
| ບໍລິສັດ ບໍລິການບັນຊີ ແລະ ກວດສອບ ຕ່າງປະເທດ | 13 | 3 | 10 |
| ບໍລິສັດຮັບໃຊ້ຜົນປະໂຫຍດສາທາລະນະ | 11 | 3 | 8 |
| ບໍລິສັດທົ່ວໄປ | 50 | 24 | 26 |
| ລວມ | 104 | 43 | 61 |

ຕາຕະລາງ 03: ນັກຝຶກອົບຮົມລຸ້ນທີ XVI :

| ພາກສ່ວນ | ຈຳນວນນັກ ຝຶກອົບຮົມ | ຊາຍ | ຍິງ |
|---|---|---|---|
| ພະນັກງານສັງກັດລັດ-ກະຊວງການເງິນ | 16 | 12 | 4 |
| ທະນາຄານແຫ່ງ ສປປ ລາວ | 6 | 1 | 5 |
| ພະນັກງານສັງກັດອົງກອນລັດອື່ນໆ | 0 | 0 | 0 |
| ສະຖາບັນການສຶກສາຕ່າງໆ | 20 | 7 | 13 |
| ບໍລິສັດ ບໍລິການບັນຊີ ພາຍໃນປະເທດ | 13 | 5 | 8 |
| ບໍລິສັດ ບໍລິການກວດສອບບັນຊີ ຕ່າງປະເທດ | 34 | 16 | 18 |
| ບໍລິສັດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ | 19 | 7 | 12 |
| ບໍລິສັດທົ່ວໄປ | 104 | 37 | 67 |
| ລວມ | 212 | 85 | 127 |

ຕາຕະລາງ 04: ນັກຝຶກອົບຮົມລຸ້ນທີ XVII:

| ພາກສ່ວນ | ຈຳນວນນັກຝຶກ ອົບຮົມ | ຊາຍ | ຍິງ |
|---|---|---|---|
| ພະນັກງານສັງກັດລັດ-ກະຊວງການເງິນ | 58 | 40 | 18 |
| ພະນັກງານສະຖາບັນການເງິນ-ການບັນຊີ (ດົງຄຳຊ້າງ) | 6 | 3 | 3 |
| ທະນາຄານແຫ່ງປະເທດລາວ | 0 | 0 | 0 |
| ພະນັກງານສັງກັດອົງກອນລັດອື່ນໆ | 3 | 2 | 1 |
| ສະຖາບັນການສຶກສາ | 2 | 0 | 2 |
| ບໍລິສັດ ບໍລິການບັນຊີ ພາຍໃນປະເທດ | 23 | 11 | 12 |
| ບໍລິສັດ ບໍລິການກວດສອບບັນຊີ ຕ່າງປະເທດ | 36 | 16 | 20 |
| ບໍລິສັດຮັບໃຊ້ຜົນປະໂຫຍດສາທາລະນະ | 17 | 6 | 11 |
| ບໍລິສັດທົ່ວໄປ | 120 | 46 | 74 |
| ລວມ | 265 | 124 | 141 |

ບັນຍາກາດການຝຶກອົບຮົມ CPA XIV




ບັນຍາກາດການຝຶກອົບຮົມ CPA XV



ບັນຍາກາດການຝຶກອົບຮົມ CPA XVI






ບັນຍາກາດການຝຶກອົບຮົມ CPA XVII





- ການຝຶກງານເປັນນັກຊ່ຽວຊານບັນຊີລາວ

ໃນວັນທີ 21 ສິງຫາ 2022 ໄດ້ຈັດປະຖົມນິເທດໃຫ້ແກ່ນັກຝຶກອົບຮົມແຕ່ລະລຸ້ນທີ່ໄດ້ຮຽນຈົບຫຼັກສູດວິຊາຊີບຊ່ຽວຊານບັນຊີ ເພື່ອກະກຽມຍື່ນເອກະສານຝຶກງານເປັນນັກຊ່ຽວຊານບັນຊີ ຊຶ່ງໃຫ້ກຽດເປັນປະ ທານໂດຍ ທ່ານ ວັນໄຊ ທອງສີຫາວົງ ຮອງຫົວໜ້າກົມຄຸ້ມຄອງການບັນຊີ ແລະ  ທ່ານ ສອນໄຊ ສີລາເພັດ, ການເຜີຍແຜ່ແມ່ນໄດ້ນຳໃຊ້ 2 ຮູບແບບຄື: ຮູບແບບ ຊຶ່ງໜ້າ ແລະ ອອນລາຍ ຊຶ່ງມີຜູ້ເຂົ້າຮ່ວມແບບຊຶ່ງໜ້າ 160 ທ່ານ ແລະ ອອນລາຍ 40 ກວ່າທ່ານ.

ຮູບບັນຍາກາດພິທີປະຖົມນິເທດກ່ຽວກັບການຝຶກງານເປັນນັກຊ່ຽວຊານບັນຊີ






ພາຍຫຼັງສຳເລັດຂະບວນການຝຶກງານເປັນທີ່ຮຽບຮ້ອຍແລ້ວ, ໃນວັນທີ 27 ທັນວາ 2022, ສວ-ບກລ ໄດ້ຈັດພິທີມອບ-ຮັບ ໃບຢັ້ງຢືນເປັນນັກຊ່ຽວຊານບັນຊີລາວຂຶ້ນ ທີ່ໂຮງແຮມ ຄຣາວພຣາຊາ ນະຄອນຫຼວງວຽງຈັນ, ຊຶ່ງມີນັກຝຶກອົບຮົມເຂົ້າຮ່ວມ ພິທີມອບ-ຮັບ ດັ່ງກ່າວຈຳນວນ 283 ທ່ານ, ໃນນັ້ນ ມີຜູ້ສຳເລັດການຝຶກອົບຮົມງວດປີ 2021 ຈຳນວນ 47 ທ່ານ ແລະ ງວດປີ 2022 ຈຳນວນ 236 ທ່ານ, ແຂກທີ່ຖືກເຊີນ ຈຳນວນ 25 ທ່ານ, ຊຶ່ງໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ພ້ອມດ້ວຍຄະນະ, ໃຫ້ກຽດເປັນປະທານພິທີໂດຍ ທ່ານ ບຸນປອນ ວັນນະຈິດ ຮອງລັດຖະມົນຕີກະຊວງການເງິນ ຊຶ່ງລາຍລະອຽດຈຳນວນຜູ້ທີ່ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ.

**ຕາຕະລາງ 05:** ລາຍລະອຽດຜູ້ທີ່ຜ່ານການຝຶກງານ ແລະ ໄດ້ຮັບໃບຢັ້ງຢືນເປັນນັກຊ່ຽວຊານບັນຊີ

| ລຸ້ນຮຽນ | ຈຳນວນທີ່ໄດ້ຮັບໃບຢັ້ງຢືນ ເປັນນັກຊ່ຽວຊານບັນຊີ | ຊາຍ | ຍິງ |
|---|---|---|---|
| ນັກຝຶກອົບຮົມ CPA ລຸ້ນທີ XII | 69 | 31 | 38 |
| ນັກຝຶກອົບຮົມ CPA ລຸ້ນທີ XIII | 83 | 38 | 45 |
| ນັກຝຶກອົບຮົມ CPA ລຸ້ນທີ XIV | 84 | 41 | 43 |
| ລວມ | 236 | 110 | 126 |

ຮູບບັນຍາກາດພິທີມອບຮັບ ໃບຢັ້ງຢືນນັກຊ່ຽວຊານບັນຊີລາວ




ພິທີມອບຮັບໃບຢັ້ງຢືນຊ່ຽວຊານບັນຊີ
Certification of CPA Ceremony
ວັນທີ 27 ທັນວາ 2022


ພິທີມອບຮັບໃບຢັ້ງຢືນຊ່ຽວຊານບັນຊີ
Certification of CPA Ceremony
ວັນທີ 27 ທັນວາ 2022


ພິທີມອບຮັບໃບຢັ້ງຢືນຊ່ຽວຊານບັນຊີ
Certification of CPA Ceremony
ວັນທີ 27 ທັນວາ 2022

❒ ການຝຶກອົບຮົມ ຍົກລະດັບວິຊາຊີບ ແບບຕໍ່ເນື່ອງ ແລະ ຫົວຂໍ້ສະເພາະ:

ເພື່ອປະຕິບັດຕາມລະບຽບການກ່ຽວກັບ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ທີ່ກໍານົດຫຼັກການພື້ນຖານ, ເງື່ອນໄຂ ແລະ ມາດຕະການການຄຸ້ມຄອງ ການຍົກລະດັບວິຊາຊີບແບບຕໍ່ເນື່ອງ ສໍາລັບນັກວິຊາຊີບການບັນຊີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 63 ຂອງກົດໝາຍວ່າດ້ວຍການບັນຊີ ແລະ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ, ເພື່ອໃຫ້ສອດຄ່ອງກັບສະພາບການໃນປັດຈຸບັນ ແລະ ມາດຕະຖານສາກົນດ້ານການສຶກສາທີ່ອອກ ໂດຍສະພາມາດຕະຖານສາກົນດ້ານການສຶກສາ ແນໃສ່ຮັບປະກັນດ້ານການຍົກລະດັບວິຊາຊີບດັ່ງກ່າວໃຫ້ມີຄຸນນະພາບສູງ. ສະນັ້ນ ໃນປີ 2022 ສອ-ບກລໄດ້ຈັດຝຶກອົບ ເພື່ອຍົກລະດັບໃຫ້ແກ່ສະມາຊິກ ຂອງ ສອ-ບກລ ລາຍດັ່ງລາຍລະອຽດລຸ່ມນີ້:

- ໃນວັນທີ 28 ມັງກອນ 2022 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບໄດ້ຈັດຝຶກອົບຮົມຮົມກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ ແລະ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ຈັດຝຶກອົບຮົມໃນຫົວຂໍ້ ກົດໝາຍວ່າດ້ວຍການບັນຊີ ແລະ ມາດຕະ ຖານລາຍງານການເງິນ, ຊຶ່ງບັນລະຍາຍໂດຍ ທ່ານ ວັນໄຊ ທອງສີຫາວົງ ຮອງຫົວໜ້າກົມຄຸ້ມຄອງການບັນຊີ ກະຊວງການເງິນ ແລະ ທ່ານ ສອນໄຊ ສີລາເພັດ ຮອງປະທານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ. ການຝຶກອົບຮົມຄັ້ງນີ້ ມີຜູ້ເຂົ້າຮ່ວມທັງໝົດ 370 ທ່ານ, ຍິງ 138 ທ່ານ, ໃນນັ້ນ ສະມາຊິກຂອງ ສອ-ບກລ ຈໍານວນ 154 ທ່ານ ນອກຈາກນັ້ນແມ່ນມາຈາກພາກສ່ວນມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສຸພານຸວົງ, ມະຫາວິທະຍາໄລສະຫວັນນະເຂດ, ວິທະຍາໄລການເງິນພາກໃຕ້, ສະຖາບັນການເງິນ-ການທະນາຄານ ແລະ ນັກຝຶກອົບຮົມ CPA ແລະ ສະມາຊິກ ຂອງ ສອ-ບກລ;



- ວັນທີ 24 ມິຖຸນາ 2022 ສອ-ບກລ ໄດ້ຈັດຝຶກອົບຮົມຫົວຂໍ້: “ຄວາມຮູ້ພື້ນຖານກ່ຽວກັບມາດຕະຖານລາຍງານການເງິນ” ໃຫ້ແກ່ບັນດາພະນັກງານຂອງບໍລິສັດໄຟຟ້ານໍ້າເທີນ 2 ໂດຍອີງຕາມການສະເໜີຂອງພະແນກຈັດຝຶກອົບຮົມຂອງ ບໍລິສັດໄຟຟ້ານໍ້າເທີນ 2 ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 13 ທ່ານ;




- ໃນວັນທີ 22-23 ກັນຍາ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຮ່ວມກັບ ບໍລິສັດໄຟຟ້ານໍ້າເທີນ 2 ໄດ້ຈັດຝຶກອົບຮົມໃນຫົວຂໍ້ການວິເຄາະທາງການເງິນ ໃຫ້ແກ່ພະນັກງານວິຊາການຈາກບໍລິສັດ ເຂື່ອນໄຟຟ້າ ນໍ້າເທີນ 2, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 17 ທ່ານ;



- ວັນທີ 30 ກັນຍາ 2022 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຮ່ວມກັບ ບໍລິສັດ ດີລອຍ (ລາວ) ຈໍາກັດຜູ້ດຽວ ໄດ້ຈັດການຝຶກອົບຮົມໃນຫົວຂໍ້ ວຽກງານສ່ວຍສາອາກອນ (Tax update) ຢູ່ທີ່ສະຖາບັນການທະນາຄານ, ບັນລະຍາຍໂດຍນັກວິທະຍາກອນຜູ້ຊ່ຽວຊານດ້ານວຽກງານສ່ວຍສາອາກອນ ຈາກ ບໍລິສັດ ດີລອຍ (ລາວ) ຈໍາກັດຜູ້ດຽວ, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 135 ທ່ານ ໃນນັ້ນ ສະມາຊິກຂອງ ສວ-ບກລ 51 ທ່ານ;




- ໃນວັນທີ 21 ແລະ ວັນທີ 28 ຕຸລາ 2022 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ (ສວ-ບກລ) ຮ່ວມກັບ ບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈໍາກັດຜູ້ດຽວ ຈັດຝຶກອົບຮົມກ່ຽວກັບວຽກງານການບັນຊີ ລົງເລີກຕົ້ນທຶນກ່ຽວຂ້ອງກັບການກູ້ຢືມ, ການຄິດໄລ່ດອກເບ້ຍທີ່ແທ້ຈິງ ຝ່າຍຜູ້ກູ້ຢືມ ແລະ ສັນຍາເຊົ່າພາຍໃຕ້ LFRS & IFRS,  ທີ່ຫ້ອງປະຊຸມ 2 ຕຶກສະໂມສອນຂອງສະຖາບັນການທະນາຄານ ດ້ວຍຮູບແບບຊຶ່ງໜ້າ ແລະ ແບບອອນລາຍ Online, ຊຶ່ງບັນລະຍາຍໂດຍ ນັກວິທະຍາກອນຜູ້ຊ່ຽວຊານດ້ານວຽກງານການບັນຊີຈາກບໍລິສັດ ພຣາຍສວໍເຕີເຮົ້າສກູບເປີສ (ລາວ) ຈໍາກັດຜູ້ດຽວ,  ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 100 ທ່ານ ໃນນັ້ນ ສະມາຊິກສາມັນຂອງ ສວ-ບກລ 40 ທ່ານ. ສະມາຊິກສົມທົບ ແລະ ນັກຝຶກອົບຮົມ CPA ຈໍານວນ 32 ທ່ານ, ແລະ ບຸກຄົນທົ່ວໄປ ຈໍານວນ 13 ທ່ານ, ແຂກຮັບເຊີນ ຈໍານວນ 15 ທ່ານ;






- ໃນວັນທີ 24 ພະຈິກ 2022 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ (ສອ-ບກລ) ໄດ້ຈັດຝຶກອົບຮົມໃນຫົວຂໍ້ ຄຸ້ມຄອງບໍລິສັດທີ່ຫ້ອງປະຊຸມ 2 ຕຶກສະໂມສອນຂອງສະຖາບັນການທະນາຄານ ດ້ວຍຮູບແບບຊື່ງໜ້າ ແລະ ອອນລາຍ, ຊຶ່ງບັນລະຍາຍໂດຍ ນັກວິທະຍາກອນຜູ້ຊ່ຽວຊານສະເພາະ ຈາກບໍລິສັດລາວໂບ ຈຳກັດຜູ້ດຽວ, ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 28 ທ່ານ ໃນນັ້ນ ສະມາຊິກສາມັນຂອງ ສອ-ບກລ 19 ທ່ານ ແລະ ບຸກຄົນທົ່ວໄປ ຈຳນວນ 11 ທ່ານ;



- ໃນວັນທີ 17 ທັນວາ 2022 ໄດ້ມີການຈັດຝຶກອົບຮົມ ກ່ຽວກັບ ການວິເຄາະທາງການເງິນ ລົງເລິກກ່ຽວກັບການປະເມີນແນວໂນ້ມເສດຖະກິດພາຍໃນ ສປປ ລາວ ແລະ ການວິເຄາະຜົນກະທົບດ້ານການເງິນຕໍ່ກັບຫົວໜ່ວຍທຸລະກິດ ແລະ ການລົງທຶນ (Lao Economica Outlook and its Financial Impacts on Businesses and Investment) ທີ່ສະຖາບັນການທະນາຄານ ດ້ວຍຮູບແບບຊຶ່ງໜ້າ, ຊຶ່ງບັນລະຍາຍໂດຍ ທ່ານ ພອນມະນີ ສີສົມພົງ, ກຳມະການຄະນະບໍລິຫານງານ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ມີຜູ້ເຂົ້າຮ່ວມທັງໝົດ 26 ທ່ານ ໃນນັ້ນມີສະມາຊິກຂອງ ສວ-ບກລ 17 ທ່ານ, ພາກສ່ວນພາຍນອກ 3 ທ່ານ ແລະ ແຂກຮັບເຊີນ 6 ທ່ານ;



❒ ສອບເສັງທົດສອບຄວາມສາມາດ

ໃນວັນທີ 24-26 ມິຖຸນາ 2022, ໄດ້ມີການສອບເສັງທົດສອບຄວາມສາມາດ ສຳລັບຜູ້ທີ່ມີໃບຢັ້ງຢືນນັກຊ່ຽວຊານ ບັນຊີຕ່າງປະເທດ, ການສອບເສັງຄັ້ງນີ້ ເປັນຄັ້ງທີ 6 ຊຶ່ງມີຈຳນວນຜູ້ເຂົ້າຮ່ວມສອບເສັງຈຳນວນ 3 ທ່ານ, ໃນນັ້ນມາຈາກສະມາຊິກນິຕິບຸກຄົນ ຂອງ ສວ-ບກລ ຈຳນວນ 2 ທ່ານ ແລະ ພາກສ່ວນທາງນອກຈຳນວນ 1 ທ່ານ.

ນອກຈາກນັ້ນທີມງານກໍໄດ້ສືບຕໍ່ກະກຽມປະສານຫາຜູ້ທີ່ມີໃບຢັ້ງຢືນນັກຊ່ຽວຊານຕ່າງປະເທດ ໂດຍສະເພາະແມ່ນຜູ້ທີ່ສົນໃຈເຂົ້າຮ່ວມການສອບເສັງ ເພື່ອເປັນຂໍ້ມູນໃນການກະກຽມການສອບເສັງຄັ້ງຕໍ່ໄປ ແລະ ຄາດວ່າຈະໄດ້ຈັດຂຶ້ນໃນປີ 2023.

### 2.3.2 ວຽກງານຄຸ້ມຄອງສະມາຊິກ

ໃນທ້າຍປີ 2022, ສວ-ບກລ ມີສະມາຊິກສາມັນນິຕິບຸກຄົນຈຳນວນ 101 ຫົວໜ່ວຍ (ໃນນັ້ນປະກອບມີສະມາຊິກສາມັນນິຕິບຸກຄົນ 95 ຫົວໜ່ວຍ ແລະ ສະມາຊິກສາມັນນິຕິບຸກຄົນສົມທົບຈຳນວນ 06 ຫົວໜ່ວຍ, ສະມາຊິກສາມັນບຸກຄົນ 206 ທ່ານ ແລະ ສະມາຊິກສົມທົບ 106 ທ່ານ (ໃນນັ້ນປະກອບມີສະມາຊິກສົມປະກອບອາຊີບ 26 ທ່ານ ແລະ ສະມາຊິກສົມທົບບໍ່ປະກອບອາຊີບ 80 ທ່ານ).

ສະມາຊິກ ສວ-ບກລ ໄດ້ແບ່ງອອກເປັນຕາມແຕ່ລະປະເພດຂອງສະມາຊິກ ຊຶ່ງລາຍລະອຽດແຕ່ລະປະເພດມີດັ່ງນີ້:

**ໂຄງຮ່າງສະແດງ ການຈຳແນກປະເພດສະມາຊິກຂອງ ສວ-ບກລ**




**ຕາຕະລາງ 06:** ສະມາຊິກບຂອງ ສວ-ບກລ

| ລ/ດ | ເນື້ອໃນລາຍລະອຽດ | ຈຳນວນ ສະມາຊິກໃນປີ 2022 |
|---|---|---|
| I. | **ສະມາຊິກນິຕິບຸກຄົນ** | **101** |
| | ສະມາຊິກ ສາມັນ | 95 |
| | ສະມາຊິກ ສົມທົບ (ສະໜັບສະໜູນ) | 06 |
| II. | **ສະມາຊິກສາມັນບຸກຄົນ** | **206** |
| III. | **ສະມາຊິກ ສົມທົບ (ສະໜັບສະໜູນ) ບຸກຄົນ** | **106** |
| | ສະມາຊິກ ສະໜັບສະໜູນ ປະກອບອາຊີບ | 26 |
| | ສະມາຊິກສະໜັບສະໜູນ ບໍ່ປະກອບອາຊີບ | 80 |

(ມີຂໍ້ມູນລາຍລະອຽດ ກ່ຽວກັບສະມາຊິກສັງກັດໃນເອກະສານຊ້ອນທ້າຍ)

ເພື່ອປະຕິບັດຕາມ ມາດຕາ 32 ຂອງກົດໝາຍວ່າດ້ວຍການກວດສອບອິດສະລະ (ການຍົກລະດັບວິຊາຊີບແບບຕໍ່ເນື່ອງ) ໃນທ້າຍປີ 2022, ສອ-ບກລ ໄດ້ຈັດຝຶກອົບຮົມໃຫ້ແກ່ສະມາຊິກ ເພື່ອຍົກລະດັບທາງດ້ານເຕັກນິກວິຊາການ ພ້ອມທັງເກັບກໍາ ແລະ ສັງລວມຈໍານວນຊົ່ວໂມງ ການເຂົ້າຮ່ວມຝຶກອົບຮົມແບບຕໍ່ເນື່ອງ (CPD) ຂອງສະມາຊິກ ໃນທ້າຍປີ 2022 ດັ່ງລາຍລາຍລະອຽດລຸ່ມນີ້:

| | | | |
|---|---|---|---|
| 1) ສະມາຊິກທີ່ບໍ່ເຂົ້າຮ່ວມເກັບຊົ່ວໂມງ CPD (0 ຊົ່ວໂມງ) | = | 18 | ຄົນ |
| 2) ສະມາຊິກທີ່ມີຊົ່ວໂມງ CPD (1-19 ຊົ່ວໂມງ) | = | 145 | ຄົນ |
| 3) ສະມາຊິກທີ່ມີຊົ່ວໂມງ CPD (20-39 ຊົ່ວໂມງ) | = | 32 | ຄົນ |
| 4) ສະມາຊິກທີ່ມີຊົ່ວໂມງ CPD (40 ຊົ່ວໂມງຂຶ້ນໄປ) | = | 11 | ຄົນ |
| | ລວມທັງໝົດ | 206 | ຄົນ |

### 2.3.3 ການປະສານສົມທົບ ແລະ ການຮ່ວມມື

ກ. ປະສານຮ່ວມມືກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ

- ແລກປ່ຽນຂໍ້ມູນສະມາຊິກ ໂດຍສະເພາະແມ່ນຂໍ້ມູນສະມາຊິກສາມັນບຸກຄົນ ແລະ ສະມາຊິກສາມັນນິຕິບຸກຄົນ;
- ກະກຽມ ແລະ ຈັດກອງປະຊຸມປຶກສາຫາລື ກ່ຽວກັບ ການຄົ້ນຄວ້າມາດຕະຖານຕ່າງໆ;
- ເຂົ້າຮ່ວມໃນຄະນະກໍາມະການຕິດຕາມຫ້ອງສອບເສັງຂອງນັກຝຶກອົບຮົມຊ່ຽວຊານບັນຊີ;
- ເຂົ້າຮ່ວມປະຊຸມວຽກງານປັບປຸງ ຄົ້ນຄວ້າ ມາດຕະຖານ ຮ່ວມກັບໜ່ວຍງານວິຊາການ ທີ່ກ່ຽວຂ້ອງຂອງກົມຄຸ້ມຄອງການບັນຊີ;
- ປະສານ ແລະ ຂໍທິດຊີ້ນໍາ ເພື່ອກະກຽມກອງປະຊຸມປະຈໍາໄຕມາດ, ປະຈໍາປີ ແລະ ວຽກງານອື່ນໆ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານຂອງ ສອ-ບກລ.
- ເຂົ້າຮ່ວມລົງຕິດຕາມ ບັນດາຫົວໜ່ວຍວິສາຫະກິດທີ່ໃຫ້ການບໍລິການດ້ານບັນຊີ ແລະ ກວດສອບ ຢູ່ບັນດາແຂວງຕ່າງໆ.

ຂ. ປະສານສົມທົບຮ່ວມກັບຄູ່ຮ່ວມຍຸດທະສາດ

- ເພື່ອປະຕິບັດຕາມບົດບັນທຶກຄວາມເຂົ້າໃຈ ຄັ້ງວັນທີ 25 ພະຈິກ 2021, ໃນປີ 2022 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ສໍານັກງານຄຸ້ມຄອງຫຼັກຊັບ ໄດ້ກະກຽມຝຶກອົບຮົມໄລຍະສັ້ນໃຫ້ກັບການນໍາຂອງຜູ້ຄຸ້ມຄອງ, ພະນັກງານວິຊາການຂອງຜູ້ຄຸ້ມຄອງ ແລະ ນັກບັນຊີ ທີ່ນອນໃນບັນດາຫົວໜ່ວຍວິສາຫະກິດທີ່ຮັບໃຊ້ຜົນປະໂຫຍດສາທາລະນະ, ການຝຶກອົບຮົມດັ່ງກ່າວແມ່ນສໍາເລັດໃນທ້າຍປີ 2022;
- ເພື່ອສືບຕໍ່ຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈ ຄັ້ງວັນທີ 15 ກໍລະກົດ 2020, ໃນປີ 2022 ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຮ່ວມກັບສະຖາບັນການທະນາຄານ ໄດ້ຮ່ວມກັນເປີດຮັບນັກຮຽນ ລຸ້ນ 2 ໃນຫຼັກສູດສາກົນ ສໍາລັບສົກປີ 2022-2023; ພ້ອມທັງເຮັດປະຖົມນິເທດໃຫ້ແກ່ນັກຮຽນ ລຸ້ນທີ 1 ແລະ ລຸ້ນ ທີ 2 ທີ່ເຂົ້າຮຽນໃນຫຼັກສູດສາກົນ ທີ່ເປີດຮັບຊຸດໃໝ່ ແລະ ນັກຮຽນແຕ່ລະຊັ້ນຮຽນ ຂອງສະຖາບັນການທະນາຄານ ເພື່ອເປັນການໂຄສະນາ ແລະ ເຜີຍແຜ່ຫຼັກສູດວິຊາຊີບຊ່ຽວຊານບັນຊີ ຊຶ່ງຈັດຂຶ້ນໃນວັນທີ 16 ທັນວາ 2022;

- ເພື່ອສືບຕໍ່ຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈ ຄັ້ງວັນທີ 27 ມິຖຸນາ 2022, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບໄດ້ມີການຈັດກອງປະຊຸມປຶກສາຫາລື ເພື່ອກະກຽມແຜນການຮ່ວມມືກັນໃນທ້າຍປີ 2022 ເຊັ່ນ: ການໃຫ້ທຶນແກ່ພະນັກງານ ວິຊາການຂອງສະຖາບັນການເງິນ ການບັນຊີ ເຂົ້າຮ່ວມຝຶກອົບຮົມໃນຫຼັກສູດວິຊາຊີບຊ່ຽວຊານບັນຊີ (CPA) ແລະ ການເຂົ້າຮ່ວມຝຶກອົບຮົມຍົກລະດັບທາງດ້ານເຕັກນິກວິຊາການທີ່ກ່ຽວຂ້ອງ, ການຮ່ວມກັນປັບປຸງຫຼັກສູດ ຂອງສະຖາບັນການເງິນການບັນຊີ ແລະ ຄວາມເປັນໄປໄດ້ໃນການຍົກຍ້າຍຫ້ອງຝຶກອົບຮົມ ແລະ ຫ້ອງການຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ;
- ເພື່ອສືບຕໍ່ຜັນຂະຫຍາຍ ບົດບັນທຶກຄວາມເຂົ້າໃຈ ຄັ້ງວັນທີ 27 ມີນາ 2017, ໃນປີ 2022 ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ແລະ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ໄດ້ສືບຕໍ່ຮ່ວມກັນຈັດຝຶກອົບຮົມຍົກລະດັບທາງດ້ານເຕັກນິກວິຊາການ, ແລກປ່ຽນຂໍ້ມູນຂ່າວສານ, ແລກປ່ຽນລະບົບການການຮຽນ-ການສອນ, ແລກປ່ຽນອາຈານສອນ ແລະ ການສອບເສັງ.

ຄ. ວຽກງານພົວພັນຕ່າງປະເທດ:

- ສະຫະພັນນັກບັນຊີອາຊຽນ (AFA):
  ສືບຕໍ່ປະສານກັບສະຫະພັນນັກບັນຊີອາຊ່ຽນເພື່ອກະກຽມບົດລາຍງານ (AFA), ການເຂົ້າຮ່ວມກອງປະຊຸມ ວິຊາການຕ່າງໆ ແລະ ກະກຽມເປີດກອງປະຊຸມສະຫະພັນນັກບັນຊີອາຊຽນ ຄັ້ງທີ 136 ທີ່ລາວເປັນເຈົ້າພາບ ຊຶ່ງຈະໄດ້ຈັດຂຶ້ນໃນລະຫວາງວັນທີ 28-30 ເມສາ 2023;
- ສະຫະພັນນັກບັນຊີສາກົນ (IFAC):
- ປະສານກັບສະຫະພັນນັກບັນຊີສາກົນ (IFAC) ເພື່ອເຂົ້າຮ່ວມກອງປະຊຸມ, ສໍາມະນາແລກປ່ຽນຂໍ້ມູນທາງດ້ານວິຊາການ, ຕອບຜົນສໍາຫຼວດຈາກ IFAC ໃນຫົວຂໍ້ Update Adoption & SMO Fulfillment, ປະກອບຄໍາຕອບ-ສິ່ງບົດ Survey ຕ່າງໆໃຫ້ກັບ IFAC.
- ປະສານກັບພາກສ່ວນອື່ນໆທີ່ກ່ຽວຂ້ອງເຊັ່ນ: ສະມາຄົມນັກບັນຊີລາຊະອານາຈັກອັງກິດ (ACCA) ເພື່ອກະກຽມສືບຕໍ່ເຊັນບົດບັນທຶກຄວາມເຂົ້າໃຈ ແລະ ມະຫາວິທະຍາໄລວິທະຍາສາດປະເທດສິງກະໂປ ເລື່ອງການຂໍເຂົ້າພົບຄະນະບໍລິຫານງານໃນການປຶກສາຫາລືວຽກງານການແລກປ່ຽນນັກຝຶກງານ;

### 2.3.4 ການເຂົ້າຮ່ວມກອງປະຊຸມສໍາມະນາຕ່າງໆ

ກ. ການຈັດ ແລະ ເຂົ້າຮ່ວມກອງປະຊຸມພາຍໃນປະເທດ

ພາຍຫຼັງມີຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງການເງິນ ວ່າດ້ວຍການແຕ່ງຕັ້ງຄະນະກະກຽມກອງປະຊຸມໃຫຍ່ ຄັ້ງທີ I ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຄະນະກໍາມະການຕ່າງໆ ມີການກະກຽມກອງປະຊຸມໃຫຍ່ຂອງຕົນຂຶ້ນ ໂດຍເລັ່ງໃສ່ການຊີ້ນໍາ-ນໍາພາ ການປັບປຸງ ບົດລາຍງານການເຄື່ອນໄຫວ ແລະ ທິດທາງແຜນການ, ແຜນພັດທະນາ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເອກະສານອື່ນໆ ຂອງກອງປະຊຸມໃຫຍ່ ໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ໄດ້ເປີດກອງປະຊຸມທາບທາມຮ່ວມກັບສະມາຊິກ ເພື່ອທາບທາມກົດລະບຽບ, ກົດການປະພຶດ ແລະ ແຜນພັດທະນາ ຂອງສອ-ບກລ, ໄດ້ດໍາເນີນການທາບທາມບຸກຄະລາກອນ ທີ່ຈະລົງສະໝັກຮັບເລືອກຕັ້ງ ຄະນະບໍລິຫານງານຊຸດໃໝ່.

ຜ່ານການດໍາເນີນ ກອງປະຊຸມໃຫ່ຍ ຄັ້ງທີ I ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ທີ່ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າ ຂອງວັນທີ 8 ເມສາ 2022 ຊຶ່ງເຕັມໄປດ້ວຍບັນຍາກາດອັນຟົດຟື້ນ, ກອງປະຊຸມໃຫຍ່ຄັ້ງທີ I ຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ ໄດ້ດໍາເນີນພາຍໃຕ້ການເປັນ

ປະທານ ທ່ານ ປອ ນາງ ພິດລານີ ພິສະໄໝ ປະທານ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ມີ ຮອງປະທານ, ຄະນະກຳມະການ, ພະນັກງານ ແລະ ສະມາຊິກ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ກອງປະຊຸມໄດ້ຈັດຂຶ້ນໃນ ສອງຮູບແບບຄື: ຮູບແບບທາງໄກ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 93 ທ່ານ (ສະມາຊິກທັງໝົດ) ແລະ ຮູບແບບຊຶ່ງໜ້າ ຊຶ່ງມີຜູ້ເຂົ້າຮ່ວມທັງ 53 ທ່ານ, ໃນນີ້ ມີສະມາຊິກ 25 ທ່ານ ແຂກທີ່ຖືກເຊີນ ຈາກພາກກົມຄຸ້ມຄອງການບັນຊີ ກະຊວງການເງິນ, ສະຖາບັນການສຶກສາ ແລະ ພາກສ່ວນອື່ນ ຈຳນວນ 28 ທ່ານ. ກອງປະຊຸມ ໄດ້ດຳເນີນໄປດ້ວຍຄວາມຮັບຜິດຊອບສູງ, ຂອງຄະນະບໍລິຫານງານ, ສະມາຊິກ, ແຂກຖືກເຊີນ ແລະ ຄະນະຮັບຜິດຊອບນຳພາດຳເນີນກອງປະຊຸມໃຫຍ່ ດ້ວຍຄວາມເປັນລະບຽບຮຽບຮ້ອຍ, ມີບັນຍາກາດອັນຟົດຟື້ນ ຕໍ່ຜົນງານ ແລະ ຜົນສຳເລັດອັນໃຫຍ່ຫຼວງ ຊຶ່ງສະແດງອອກດັ່ງນີ້:

- ກອງປະຊຸມໃຫຍ່ ຄັ້ງທີ I ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໄດ້ເຫັນດີເປັນເອກະພາບກັນຮັບຮອງເອົາບົດລາຍງານການເຄື່ອນໄຫວ ແຕ່ ປີ 2014 ຫາ 2021, ກົດລະບຽບຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ,ແຜນພັດທະນາ ແລະ ກົດການປະພຶດ ຢ່າງຖືກຕ້ອງຕາມຄວາມເປັນຈິງໂດຍຍົກໃຫ້ເຫັນດ້ານດີທີ່ພົ້ນເດັ່ນ, ດ້ານອ່ອນທີ່ຍັງຄົງຄ້າງ ແລະ ໄດ້ກຳນົດທິດທາງ, ແຜນການ, ຄາດໝາຍສູ້ຊົນ ແຕ່ປີ 2022 ຫາ 2026 ວາງອອກໃຫ້ປະກົດຜົນເປັນຈິງ;

  ຜູ້ແທນກອງປະຊຸມໃຫຍ່ ໄດ້ໃຊ້ສິດປະຊາທິປະໄຕຂອງຕົນ ປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຊຸດໃໝ່ບົນພື້ນຖານຫຼັກການລວມສູນປະຊາທິປະໄຕຢ່າງຖືກຕ້ອງ ແລະ ສອດຄ່ອງກັບມາດຖານ, ເງື່ອນໄຂທີ່ກຳນົດໄວ້ຊຶ່ງມີຜູ້ສະໝັກຮັບເລືອກຕັ້ງ ທັງໝົດຈຳນວນ 12 ທ່ານ, ໃນນັ້ນ ໃຫ້ເລືອກເອົາ 09 ທ່ານ ສ່ວນອີກສອງທ່ານແມ່ນ ມາຈາກົມຄຸ້ມຄອງການບັນຊີ ແລະ ສະຖາບັນການສຶກສາ ພາກສ່ວນລະໜຶ່ງທ່ານ ແລະ ໄດ້ເປີດກອງປະຊຸມປະຖົມມະເລີກເປັນເອກະສັນຢ່າງສົມບູນ ເພື່ອມອບໝາຍ ແລະ ແບ່ງຄວາມຮັບຜິດຊອບພາຍໃນຄະນະດັ່ງນີ້:

  1. ທ່ານ ສອນໄຊ ສີລາເພັດ — ເປັນປະທານ ສວ-ບກລ;
  2. ທ່ານ ຄຳປິວ ທິບພະວົງພັນ — ເປັນຮອງປະທານ ສວ-ບກລ;
  3. ທ່ານ ບຸນເຫຼືອ ດາວວິໄລ — ເປັນຮອງປະທານ ສວ-ບກລ;
  4. ທ່ານ ນາງ ມະນີສຸກ ໄຊຍະວົງສາ — ເປັນກຳມະການ ສວ-ບກລ;
  5. ທ່ານ ພອນມະນີ ສີສົມພົງ — ເປັນກຳມະການ ສວ-ບກລ;
  6. ທ່ານ ນາງ ປັນຍາທິບ ວົງສຸລີ — ເປັນກຳມະການ ສວ-ບກລ;
  7. ທ່ານ ນາງ ຄຳແຫວນ ຈິນດາວົງ — ເປັນກຳມະການ ສວ-ບກລ;
  8. ທ່ານ ນາງ ມະໄລພອນ ບົວລັນ — ເປັນກຳມະການ ສວ-ບກລ;
  9. ຕາງໜ້າຈາກ ສະຖາບັນການເງິນ ການບັນຊີ 1 ທ່ານ — ເປັນກຳມະການ ສວ-ບກລ.







- ກອງປະຊຸມຮ່ວມກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ

- ໃນວັນທີ 14 ມັງກອນ 2022, ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ກ່ຽວກັບ ການກະກຽມກອງປະຊຸມໃຫຍ່ ຄັ້ງທີ I ຂອງ ສວ-ບກລ ເພື່ອລາຍງານຄວາມຄືບໜ້າຂອງຄະນະຮັບຜິດຊອບການ

ກະກຽມການດຳເນີນກອງປະຊຸມຄັ້ງທີ I ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ພ້ອມທັງລາຍງານການເຄື່ອນໄຫວວຽກງານອື່ນໆ, ຊຶ່ງໃຫ້ກຽດເປັນປະທານໂດຍ ທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ກະຊວງການເງິນ;

- ໃນວັນທີ 26 ມັງກອນ 2022, ປະທານ ສວ-ບກລ ໄດ້ເປັນກຽດເຂົ້າຮ່ວມກອງປະຊຸມ ວິຊາການສ້າງທ່າທີປຸ່ງປຸງໃໝ່ ຂອງວິສາຫະກິດບັນຊີ ແລະ ວິສາຫະກິດກວດສອບ ໃຫ້ເປັນຕົວແທນໃຫ້ພາກລັດ ໃນການຊຸກຍູ້ການຖືບັນຊີ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ເພື່ອບັນລະຍາຍກ່ຽວກັບການຍົກຄຸນນະພາບດ້ານວິຊາຊີບ ສຳລັບນັກວິຊາຊີບການບັນຊີ, ຊຶ່ງຈັດໂດຍກົມຄຸ້ມຄອງການບັນຊີ ກະຊວງການເງິນ ແລະ ໃຫ້ກຽດເປັນປະທານໂດຍ ທ່ານ ປອ ພູທະນູເພັດ ໄຊສົມບັດ ຮອງລັດຖະມົນຕີ ກະຊວງການເງິນ;




- ໃນຕອນເຊົ້າຂອງວັນທີ 27 ເດືອນ ເມສາ ປີ 2022, ປະທານ ແລະ ຄະນະບໍລິຫານງານ ສວ-ບກລ ພ້ອມດ້ວຍທີມງານ ໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລື ດ້ານວິຊາການ ກ່ຽວກັບ ມາດຕະຖານສາກົນດ້ານການລາຍງານການເງິນຕາມພື້ນຖານເງິນສົດ, ໂດຍມີທ່ານ ອຸດອນ ທຳມະວົງສາ ຮອງຫົວໜ້າກົມຄຸ້ມຄອງການບັນຊີ ເປັນປະທານກອງປະຊຸມ;



- ໃນຕອນເຊົ້າຂອງວັນທີ 29 ເດືອນ ເມສາ ປີ 2022, ສອ-ບກລ ແລະ ມະຫາວິທະຍາໄລ ສຸພານຸວົງ ໄດ້ຈັດກອງປະຊຸມປຶກສາຫາລືການຮ່ວມມືດ້ານວິຊາການ ລະຫວ່າງ ສອ-ບກລ ແລະ ມະຫາວິທະຍາໄລສຸພາ ນຸວົງ ດ້ວຍຮູບແບບອອນລາຍ ຊຶ່ງມີຜູ້ເຂົ້າຮ່ວມຈຳນວນ 14 ທ່ານ ຊຶ່ງປະກອບດ້ວຍ ຄະນະບໍລິຫານງານ ສອ-ບກລ ເຂົ້າຮ່ວມຈຳນວນ 03 ທ່ານ, ທ່ານ ປອ ທອງພັນ ຈັນຖາວອນ ຄະນະບໍດີ ມະຫາວິທະຍາໄລສຸ ພານຸວົງ ພ້ອມດ້ວຍທີມງານທາງມະຫາວິທະຍາໄລ ສຸພານຸວົງ ໄດ້ເຂົ້າຮ່ວມ 05 ທ່ານ ພ້ອມທັງພະນັກງານ ວິຊາການຂອງ ສອ-ບກລ ຈຳນວນ 06 ທ່ານ, ໂດຍມີທ່ານ ສອນໄຊ ສີລາເພັດ ເປັນປະທານກອງປະຊຸມ ຄັ້ງນີ້;
- ໃນຕອນເຊົ້າຂອງວັນທີ 09 ພຶດສະພາ ປີ 2022, ຄະນະບໍລິຫານງານ ສອ-ບກລ ພ້ອມດ້ວຍທີມງານ ໄດ້ເຂົ້າຮ່ວມກອງປະຊຸມແລກປ່ຽນດ້ານວິຊາການ ກ່ຽວກັບ ການຈັດຕັ້ງວຽກງານບັນຊີ ຂອງພາກລັດ ແລະ ສາກົນ, ໂດຍມີທ່ານ ອຸດອນ ທຳມະວົງສາ ຮອງຫົວໜ້າກົມຄຸ້ມຄອງການບັນຊີ ເປັນປະທານກອງປະຊຸມ;
- ໃນວັນທີ 21 ມິຖຸນາ 2022 ປະທານ ສອ-ບກລ ພ້ອມດ້ວຍຄະນະບໍລິຫານງານ ແລະ ວິຊາການໄດ້ເຂົ້າປະຊຸມຮ່ວມກັບກົມຄຸ້ມຄອງການບັນຊີ ກະຊວງການເງິນ ກ່ຽວກັ ການສະຫຼຸບວຽກງານບັນຊີທົ່ວປະເທດ ໂດຍການເປັນປະທານຂອງ ທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ກະຊວງການເງິນ ຊຶ່ງມີບັນດາຫົວໜ້າພະແນກ, ຮອງພະແນກ ແລະ ວິຊາການ ຈາກກົມຄຸ້ມຄອງການບັນຊີເຂົ້າຮ່ວມ;

ໃນກອງປະຊຸມໄດ້ລາຍງານກ່ຽວກັບແຜນການຮ່ວມມືດ້ານວິຊາການ ລະຫວ່າງ ສອ-ບກລ ກັບສະຖາບັນການເງິນ - ການບັນຊີ, ປຶກສາຫາລື ກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງຂອງ ລັດຖະມົນຕີກະຊວງການເງິນວ່າດ້ວຍການຮັບຮອງ ເອົາຫຼັກສູດທີ່ປຶກສາບັນຊີ ສະບັບເລກທີ 0583/ກງ ລົງວັນທີ 24 ກຸມພາ 2022, ການປັບປຸງລະບຽບການຝຶກງານເປັນນັກຊ່ຽວຊານບັນຊີ ແລະ ແຜນການຮ່ວມມືລະຫວ່າງກົມຄຸ້ມຄ້ອງການບັນຊີ ແລະ ສອ-ບກລ;



- ໃນວັນທີ 15 ທັນວາ 2022, ທີມງານ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມ ເຜີຍແຜ່ນິຕິກຳ ໃນຫົວຂໍ້ ຄວາມຮູ້ທົ່ວໄປກ່ຽວກັບການສ້າງນິຕິກຳ, ຊຶ່ງຈັດໂດຍ ກົມຄຸ້ມຄອງການບັນຊີ ກະຊວງການເງິນ, ຂຶ້ນບັນ ລະຍາໂດຍ ຜູ້ຊ່ຽວຊານຈາກກະຊວງຍຸຕິທຳ;
- ໃນວັນທີ 23 ທັນວາ 2022, ປະທານ ພ້ອມດ້ວຍທີມງານຂອງ ສວ-ບກລ ຈຳນວນ 03 ທ່ານ ໄດ້ເຂົ້າກອງ ປະຊຸມສະຫຼຸບບັນຊີທົ່ວປະເທດ, ຊຶ່ງຈັດໂດຍກົມຄຸ້ມຄອງການບັນຊີ ກະຊວງການເງິນ ໂດຍການເປັນ ປະທານຂອງທ່ານ ນາງ ດາວອນ ທອງຈັນ ຫົວໜ້າກົມຄຸ້ມຄອງການບັນຊີ ກະຊວງການເງິນ.

▪ ກອງປະຊຸມຄະນະຜູ້ປະຈຳການ

ຫຼັງຈາກມີຂໍ້ຕົກລົງແຕ່ງຄະນະຜູ້ປະຈຳການປະຊຸມ, ຄະນະດັ່ງກ່າວໄດ້ະຕິບັດຕາມໜ້າທີ່ຂອງຕົນເປັນ ປົກ ກະຕິເພື່ອຊີ້ນຳການເຄື່ອນໄຫວວຽກງານຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ເຂົ້າຮ່ວມ ກອງປະຊຸມຂອງຄະນະບໍລິຫານງານ, ເພື່ອຢືນຢັນການປະຕິບັດມະຕິຂອງຄະນະບໍລິຫານງານວ່າໄດ້ຖືກດຳເນີນ ຢ່າງມີປະ ສິດທິພາບ ແລະ ຖືກຕ້ອງ.

- ໃນວັນທີ 11 ແລະ 12 ສິງຫາ 2022 ໄດ້ຈັດກອງປະຊຸມຄະນະຜູ້ປະຈຳການເພື່ອປຶກສາຫາລືວຽກງານທີ່ ເລັ່ງດ່ວນຈັດຕັ້ງປະຕິບັດ ພ້ອມທັງສຳພາດພະນັກງານ ເພື່ອປະກອບເຂົ້າໃນວຽກງານຄົ້ນຄວ້າມາດຕະຖານ , ຝຶກອົບຮົມ ແລະ ການປະສານງານ;
- ໃນວັນທີ 08 ກັນຍາ 2022 ໄດ້ຈັດກອງປະຊຸມຄະນະຜູ້ປະຈຳການເພື່ອປຶກສາຫາລື ກ່ຽວກັບ ການ ກະກຽມຮັບແບບຟອມຝຶກງານ ແລະ ປຶກສາຫາລື ກ່ຽວກັບ ການປັບປຸງຂໍ້ຕົກລົງ ວ່າດ້ວຍການກຳນົດການ ໃຊ້ຈ່າຍງົບປະມານບໍລິຫານຂອງ ສວ-ບກລ;
- ໃນວັນທີ 20 ຕຸລາ 2022 ໄດ້ຈັດກອງປະຊຸມຄະນະຜູ້ປະຈຳການເພື່ອປຶກສາຫາລື ກ່ຽວກັບ ການກະ ກຽມຮັບແບບຟອມຝຶກງານ ແລະ ປຶກສາຫາລື ກ່ຽວກັບການລາຍງານ ຜົນການສັງລວມ ແບບຟອມຝຶກ ງານ.
- ໃນວັນທີ 17 ພະຈິກ 2022 ໄດ້ຈັດກອງປະຊຸມຄະນະຜູ້ປະຈຳການເພື່ອລາຍງານຜົນການຝຶກງານເປັນນັກ ຊ່ຽວຊານບັນຊີລາວ ແລະ ເພື່ອປຶກສາຫາລືໃນການກະກຽມຈັດກອງປະຊຸມຄະນະກຳມະການສຶກສາ ເພື່ອ ລາຍງານຜົນການຝຶກງານ;
- ໃນວັນທີ 13 ທັນວາ 2022, ໄດ້ມີການຈັດກອງປະຊຸມຄະນະຜູ້ປະຈຳການຂຶ້ນ ເພື່ອປຶກສາຫາລືກ່ຽວກັບ ການຈັດພິທີມອບ-ຮັບ ໃບຢັ້ງຢືນການເປັນນັກຊ່ຽວຊານບັນຊີລາວ ທີ່ຈະຈັດຂຶ້ນໃນວັນທີ 27 ທັນວາ 2022.

▪ ກອງປະຊຸມຄະນະບໍລິຫານງານ:

- ວັນທີ 22 ເດືອນ ມັງກອນ ປີ 2022, ສວ-ບກລ ໄດ້ຈັດກອງປະຊຸມຄະນະບໍລິຫານງານຂຶ້ນທາງອອນລາຍ ຊຶ່ງມີຄະນະບໍລິຫານງານເຂົ້າຮ່ວມຈຳນວນ 09 ທ່ານ ພ້ອມທັງພະນັກງານວິຊາການຂອງ ສວ-ບກລ ຈຳນວນ 06 ທ່ານ, ໂດຍມີທ່ານ ປອ ນ. ພິລານີ ພິດສະໄໝ ເປັນປະທານກອງປະຊຸມຄັ້ງນີ້. ຊຶ່ງເນື້ອໃນ ຫຼັກຂອງກອງປະຊຸມມີ: ລາຍງານຄວາມຄືບໜ້າໃນການກະກຽມກອງປະຊຸມໃຫຍ່, ການຜ່ານກົດການ ປະພຶດ, ການປະເມີນ ສວ-ບກລ ຕາມ Maturity Model ເພື່ອສ້າງແຜນພັດທະນາ (ແຜນຍຸດທະສາດ), ຜ່ານເງື່ອນໄຂຜູ້ສະໝັກຄະນະບໍລິຫານງານ, ກະກຽມ ເປີດຝຶກອົບຮົມ CPA ລຸ້ນທີ 17, ກະກຽມ ເປີດ ຮັບທີ່ປຶກສາບັນຊີລຸ້ນທີ 1-11 ເຂົ້າຍົກລະດັບ ຮ່ວມກັບ CPA ລຸ້ນທີ 15, ການປະສານຮ່ວມມືກັບຄູ່ ຮ່ວມຍຸດທະສາດ ໂດຍສະເພາະແມ່ນ ສຄຄຊ ແລະ ສທດ, ການເສຍພັນທະອາກອນລາຍໄດ້ ສຳລັບ

ອາຈານສອນ CPA, ການສະເໜີຂໍໃບຍ້ອງຍໍ ແລະ ຫຼຽນໄຊກາແຮງງານໃຫ້ຄະນະບໍລິຫານງານ, ຊ່ຽວຊານຝຣັ່ງ ແລະ ພະນັກ ງານ ສອ-ບກລ;

- ໃນວັນທີ 10 ມິຖຸນາ 2022 ສອ-ບກລ ໄດ້ມີການຈັດກອງປະຊຸມຄະນະບໍລິຫານງານຂຶ້ນທີ່ຫ້ອງປະຊຸມ ຫ້ອງການ ສອ-ບກລ, ກອງປະຊຸມຄັ້ງນີ້ເປັນກອງປະຊຸມຄັ້ງທຳອິດຂອງຄະນະບໍລິຫານງານຊຸດໃໝ່ພາຍ ຫຼັງທີ່ໄດ້ຮັບການແຕ່ງຕັ້ງ (ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 1264/ກງ, ລົງ ວັນທີ 10 ພຶດສະພາ 2022). ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນ ເພື່ອປຶກສາຫາລືບັນຫາຮີບດ່ວນ ຕ່າງໆ ຂອງ ສອ-ບກລ ເຊັ່ນ: ການປັບປຸງຕາປະທັບ ຂອງ ສອ-ບກລ, ການກວດສອບ ເອກະສານລາຍ ງານການເງິນ ປະຈຳປີ 2021 ຂອງ ສອ-ບກລ; ການປັບປຸງລະບຽບການຝຶກງານ ເປັນນັກຊ່ຽວຊານບັນຊີ, ການພິຈາລະນາກ່ຽວກັບການຕໍ່ສັນຍາ ຊ່ຽວຊານຝລັ່ງ, ປັບປຸງ ແລະ ສ້າງຕັ້ງຄະນະກຳມະການຕ່າງ ໆ ຂອງ ສອ-ບກລ ໃຫ້ແທດເໝາະກັບສະພາບການ ແລະ ໂຄງຮ່າງການຈັດຕັ້ງ ແລະ ໜ້າວຽກຂອງຄະນະບໍລິຫານ ງານຊຸດໃໝ່;
- ໃນວັນທີ 4 ສິງຫາ 2022 ໄດ້ຈັດກອງປະຊຸມຄະນະບໍລິຫານງານ ສອ-ບກລ ຊຸດທີ 2 ຄັ້ງທີ 2 ຂຶ້ນໃນຮູບ ແບບຊຶ່ງໜ້າ ໂດຍການເປັນປະທານຂອງ ທ່ານ ສອນໄຊ ສີລາເພັດ ປະທານ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ, ຊຶ່ງມີຄະນະບໍລິຫານງານຈຳນວນ 8 ທ່ານ ແລະ ພະນັກງານວິຊາການ 6 ທ່ານ ເຂົ້າຮ່ວມ , ຫົວຂໍ້ໃນການປະຊຸມຄັ້ງນີ້ ແມ່ນເພື່ອສະເໜີຂໍອະນຸມັດ ສະເໜີເຊັນ MoU ກັບ ACCA, ການຮັບເອົາທີ່ ປຶກສາທາງດ້ານວິຊາການ, ການຮັບສະໝັກພະນັກງານ, ການກະກຽມຈັດປະຖົມນິເທດໃຫ້ CPA 12, 13, 14: ໂດຍຈະຈັດຂຶ້ນໃນວັນເສົາ ວັນທີ 21 ສິງຫາ 2022 ແບບຊຶ່ງໜ້າຢູ່ສະໂມສອນໃຫຍ່ສະຖາບັນ ການເງິນ-ການບັນຊີ (ດົງຄຳຊ້າງ) ກອງປະ ຊຸມເຫັນດີໃຫ້ຈັດປະຖົມນິເທດໃຫ້ CPA ລຸ້ນທີ 12, 13, 14; ຕາມວັນ ແລະ ເວລາທີ່ທີມງານກຳນົດໄວ້.
- ໃນຕອນແລງຂອງວັນທີ 23 ກັນຍາ ປີ 2022 ເວລາ 15 ໂມງ 30 ນາທີ ສອ-ບກລ ໄດ້ຈັດກອງປະຊຸມ ຄະນະບໍລິຫານງານ ແບບອອນລາຍຂຶ້ນ ຊຶ່ງມີຄະນະບໍລິຫານ ເຂົ້າຮ່ວມຈຳນວນ 07 ທ່ານ ພ້ອມທັງ ພະນັກງານວິຊາການຂອງ ສອ-ບກລ ຈຳນວນ 02 ທ່ານ, ໂດຍມີທ່ານ ສອນໄຊ ສີລາເພັດ ເປັນປະທານ ກອງປະຊຸມ, ຫົວຂໍ້ຫຼັກໃນກອງປະຊຸມຄັ້ງນີ້ແມ່ນ ເພື່ອສະເໜີປັບປຸງຂໍ້ຕົກລົງ ວ່າໂດຍການກຳນົດການໃຊ້ ຈ່າຍງົບປະມານບໍລິຫານຂອງ ສອ-ບກລ ສະບັບເລກທີ: 009/ສອ-ບກລ ລົງວັນທີ 08 ກຸມພາ 2019. ຈຸດປະສົງຂອງການປັບປຸງ ແມ່ນເພື່ອໃຫ້ການເບີກຈ່າຍງົບປະມານການດຳເນີນກິດຈະກຳຂອງ ສອ-ບກລ ແທດເຫມາະກັບສະພາບເສດຖະກິດໃນປັດຈຸບັນ;
- ໃນວັນທີ 19 ທັນວາ 2022, ໄດ້ຈັດກອງປະຊຸມ ຄະນະບໍລິຫານງານຂຶ້ນ ເພື່ອສະຫຼຸບວຽກງານການເຄື່ອນ ໄຫວຂອງ ສອ-ບກລ ໃນໜຶ່ງປີຜ່ານມາ, ຊຶ່ງມີຄະນະບໍລິຫານງານເຂົ້າຮ່ວມທັງໝົດ 9 ທ່ານ ແລະ ທີມງານ ຂອງ ສອ-ບກລ 9 ທ່ານ.

▪ ກອງປະຊຸມຄະນະກຳມະການຕ່າງໆ:

ສຳລັບຄະນະກຳມະການຕ່າງ ທີ່ຫາກໍໄດ້ຮັບການແຕ່ງຕັ້ງໃນທ້າຍປີ 2022, ຍົກເວັ້ນຄະນະກຳມະການ ສຶກສາ ທີ່ ໄດ້ຮັບການແຕ່ງຕັ້ງມາຕັ້ງແຕ່ວັນທີ 12 ພຶດສະພາ 2016 ແລະ ຄະນະດັ່ງກ່າວໄດ້ມີການການປັບປຸງ ຕາມຂໍ້ຕົກລົງແຕ່ງຕັ້ງ ສະບັບເລກທີ 222/ສອ-ບກລ ລົງວັນທີ 21 ພະຈິກ 2022, ເຊັນຮັບຮອງໂດຍປະທານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ.

- ໃນວັນທີ 30 ສິງຫາ 2022 ຄະນະກຳມະການສຶກສາ ແລະ ຜູ້ໃຫ້ຄຳປຶກສາໃນການຝຶກງານ ໄດ້ຈັດກອງ ປະຊຸມປຶກສາຫາລືເຜີຍແຜ່ລະບຽບການກ່ຽວກັບການຝຶກງານເປັນນັກຊ່ຽວຊານບັນຊີ(ສະບັບປັບປຸງ);

- ວັນທີ 28 ພະຈິກ 2022 ໄດ້ຈັດກອງປະຊຸມຄະນະກຳມະການສຶກສາຂຶ້ນ ດ້ວຍຮູບແບບຊຶ່ງໜ້າ ແລະ ອອນລາຍ ເພື່ອລາຍງານຜົນການຝຶກງານເປັນນັກຊ່ຽວຊານບັນຊີລາວ, ໂດຍມີ ທ່ານປະທານ ແລະ ຮອງປະທານ ສວ-ບກລ ພ້ອມດ້ວຍຄະນະ, ປະທານຄະນະກຳການສຶກສາ ພ້ອມດ້ວຍຄະນະ ແລະ ທີມງານຮັບຜິດຊອບ ຈາກ ສວ-ບກລ ເຂົ້າຮ່ວມ ຈຳນວນ 11 ທ່ານ;
- ໃນທ້າຍເດືອນທັນວາ 2022, ໄດ້ຈັດກອງປະຊຸມຄະນະກຳມະການສຶກສາ ເພື່ອປຶກສາຫາລື ແລະ ຂໍຄຳເຫັນ ຕໍ່ພິທີມອບ-ຮັບໃບຢັ້ງຢືນນັກຊ່ຽວຊານບັນຊີລາວ ພ້ອມທັງເຊີນເຂົ້າຮ່ວມໃນພິທີດັ່ງກ່າວ.

▪ ກອງປະຊຸມກັບຄູ່ຮ່ວມຍຸດທະສາດ

- ໃນວັນທີ 3 ຕຸລາ 2022 ໄດ້ປະຊຸມຮ່ວມກັບສະຖາບັນການເງິນ ການບັນຊີ ເພື່ອຈັດພິທີມອບ-ຮັບ ນັກຝຶກງານທີ່ໄດ້ລົງຝຶກງານນຳບໍລິສັດທີ່ເປັນສະມາຊິກຂອງສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ;
- ໃນວັນທີ 11 ພະຈິກ 2022 ໄດ້ປະຊຸມຮ່ວມກັບສະຖາບັນການເງິນ ການບັນຊີ ເພື່ອສືບຕໍ່ຜັນຂະຫຍາຍບົດບັນທຶກຄວາມເຂົ້າໃຈ ໂດຍສະເພາະແມ່ນການແຕ່ງຕັ້ງຄະນະຜູ້ຮັບຜິດຊອບປະສານງານຂອງທັງສອງຝ່າຍ.

**ຂ. ການຈັດ ແລະ ເຂົ້າຮ່ວມ ກອງປະຊຸມຕ່າງປະເທດ:**

- ວັນທີ 09 ກຸມພາ 2022, ທ່ານ ຮອງປະທານ ສວ-ບກລ ໄດ້ເປັນກຽດເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບ ການຕໍ່ເວລາຂອງສັນຍາຮ່ວມມືລະຫວ່າງ ສະມາຄົມນັກບັນຊີ ລາຊະອານາຈັກອັງກິດ (ACCA), ຊຶ່ງທັງສອງຝ່າຍໄດ້ຕົກລົງເຫັນດີເປັນເອກະພາບກັນໃນການຕໍ່ໄລຍະການຮ່ວມມື;
- ວັນທີ 14 ກຸມພາ 2022, ຕາງໜ້າຈາກກົມຄຸ້ມຄອງການບັນຊີ ທ່ານ ບຸນເຫຼືອ ດາວວິໄລ ແລະ ຕາງໜ້າ ສວ-ບກລ ທ່ານ ກອງປະຊາ ແສງສຸລິວົງ ໄດ້ເຂົ້າຮ່ວມກອງປະຊຸມຄະນະກຳມະການປະສານງານດ້ານວິຊາຊີບບັນຊີອາຊຽນ;
- ວັນທີ່ 25 ກຸມພາ 2022 ທ່ານ ປະທານ ສວ-ບກລ ໄດ້ເຂົ້າຮ່ວມກອງປະຊຸມກ່ຽວກັບ SMO4 ກົດຈັນຍາບັນທີ່ຈັດຂຶ້ນໂດຍ ສະຫະພັນນັກບັນຊີອາຊຽນ (AFA) ແລະ ສະໜັບສະໜູນໂດຍ ສະຫະພັນນັກບັນຊີສາກົນ (IFAC), ຈຸດປະສົງ ຂອງກອງປະຊຸມຄັ້ງນີ້ແມ່ນເພື່ອອຳນວຍຄວາມສະດວກໃນການແລກປ່ຽນສະຫວ່າງສະມາຊິກດ້ວຍກັນ, ກຳນົດຄວາມສຳຄັນ ແລະ ບັນຫາທົ່ວໄປທີ່ພົບເຫັນ;
- ວັນທີ 20 ເມສາ 2022 ຕາງໜ້າຈາກພະແນກບັນຊີແຫງລັດ ກົມຄຸ້ມຄອງການບັນຊີ ໄດ້ຮ່ວມສຳມະນາທາງໄກກັບສະຫະພັນນັກບັນຊີອາຊຽນ (AFA) ແລະ ສະຫະພັນນັກບັນຊີ ສາກົນ (IFAC) ກ່ຽວກັບ SMO 5;

- ໃນວັນທີ 20 ພຶດສະພາ 2022 ສອ-ບກລ ຮ່ວມມືກັບ ມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະ ຍາໄລສີປະທຸມໄດ້ຈັດງານສຳມະນາທາງໄກ ພາຍໃຕ້ຫົວຂໍ້ສະກຸນເງິນຄຣິບໂຕ ແລະ ການວາງແຜນດ້ານສ່ວຍສາອາກອນ (Cryptocurrency and Tax Planning);




- ວັນທີ 26 ພຶດສະພາ 2022 ທ່ານ ສອນໄຊ ສີລາເພັດ ປະທານ ສອ-ບກລ, ທ່ານ ບຸນເຫຼືອ ດາວວິໄລ ແລະ ທ່ານ ຄຳປິວ ທິບພະວົງພັນ ຮອງປະທານ ສອ-ບກລ ໄດ້ເຂົ້າຮ່ວມກອງປະຊຸມອອນລາຍ ຮ່ວມກັບຄະນະກຳມະການສະຫະພັນນັກບັນຊີອາຊຽນ (AFA) ຄັ້ງທີ 134 ຊຸດທີ 1 ຂອງປີ 2022;
- ວັນທີ 24 ພຶດສະພາ 2022, ຄະນະບໍລິຫານງານ ຂອງ ສອ-ບກລ ຈຳນວນ 3 ທ່ານ ເຂົ້າຮ່ວມກອງປະຊຸມສຳມະນາທາງອອນລາຍ ກັບສະຫະພັນນັກບັນຊີ ອາຊຽນ ແລະ ສະຫັນພັນນັກບັນຊີ ສາກົນ (AFA, IFAC- SMO7) ກ່ຽວກັບ ມາດຕະຖານການລາຍງານການເງິນສາກົນ;
- ໃນວັນທີ 15 ມິຖຸນາ 2022 ທ່ານ ສອນໄຊ ສີລາເພັດ ປະທານ ສອ-ບກລ ໄດ້ຮັບກຽດໃນການເປັນຜູ້ບັນຍາຍໃນກອງປະຊຸມທາງໄກໃນຫົວຂໍ້ AFA and CPA Australia Asia-Pacific small business survey 2021-2022;
- ໃນວັນທີ 21 ມິຖຸນາ 2022 ທ່ານ ຄຳປິວ ທິບພະວົງພັນ-ຮອງປະທານ ສອ-ບກລ ໄດ້ເຂົ້າຮ່ວມງານສຳມະນາທາງອອນລາຍ ໃນຫົວຂໍ້ Connecting the Accountancy Education Ecosystem Webinar ທີ່ຈັດຮ່ວມກັນລະຫວ່າງທະນາຄານໂລກ (World Bank) ແລະ ສະຫະພັນນັກບັນຊີສາກົນ (IFAC);
- ໃນວັນທີ 22 ມິຖຸນາ 2022 ທ່ານ ຄຳປິວ ທິບພະວົງພັນ - ຮອງປະທານ ສອ-ບກລ ແລະ ທ່ານ ນາງ ຄຳແຫວນ ຈິນດາວົງ - ຄະນະບໍລິຫານງານ ສອ-ບກລ ໄດ້ເຂົ້າຮ່ວມງານສຳມະນາທາງໄກໃນຫົວຂໍ້ Moving from Cash-Basis to Accruals-Basis Accounting MENA Webinar ທີ່ຈັດຮ່ວມກັນໂດຍ ທະນາຄານໂລກ (World Bank) ແລະ ສະຫະພັນນັກບັນຊີສາກົນ (IFAC);
- ໃນວັນທີ 29 ມິຖຸນາ 2022 ທ່ານ ຄຳປິວ ທິບພະວົງພັນ - ຮອງປະທານ ສອ-ບກລ ໄດ້ເຂົ້າຮ່ວມສາມະນາທາງໄກໃນຫົວຂໍ້ CAPA Professional Qualification Webinar;

- ວັນທີ 14 ກັນຍາ 2022 ສະຫະພັນນັກບັນຊີອາຊຽນ (AFA) ໄດ້ແຈ້ງການ ອະນຸມັດການສະໝັກເຂົ້າຮ່ວມເປັນຄະນະໃນການເຮັດວຽກຮ່ວມກັບ AFA ( AFA Working Committee) ໄດ້ສະໝັກເຂົ້າຮ່ວມ 3 ທ່ານດັ່ງນີ້:
    1) ທ່ານ ຄຳປິວ ທິບພະວົງພັນ ຮອງປະທານ ສວ-ບກລ ໄດ້ຖືກຮັບຮອງໃນຄະນະກຳມະການ ທີ 1 ວ່າດ້ວຍການ ຮັບຮອງເອົາ ແລະ ການຈັດຕັ້ງປະຕິບັດ ມາດຕະຖານສາກົນ (Adoption and Implementation of International Standard)
    2) ທ່ານ ນາງ ປັນຍາທິບ ວົງສຸລິ ໄດ້ຖືກຮັບຮອງໃນຄະນະກຳມະການ ທີ 2 ວ່າດ້ວຍ ຄວາມຄິດແບບຜູ້ນຳ (Thought Leadership)
    3) ທ່ານ ນາງ ມະນີສຸກ ໄຊຍະວົງສາ ໄດ້ຖືກຮັບຮອງໃນຄະນະກຳມະການ ທີ 3 ວ່າດ້ວຍການເສີມສ້າງຄວາມສາມາດຂອງອົງການຈັດຕັ້ງວິຊາຊີບການບັນຊີ (Professional Accountancy Organizations Capacity Building).
- ວັນທີ 15 ກັນຍາ 2022 ທ່ານ ກອງປະຊາ ແສງສຸລິວົງ ຄະນະກາມະການສຶກສາຂອງ ສວ-ບກລ ໄດ້ເຂົ້າຮ່ວມການສຳມະນາແບບທາງໄກກັບ ACCA (ACCA Webinar) ໃນຫົວຂໍ້ How EdTech is super charging accountants' careers;
- ວັນທີ 20 ກັນຍາ 2022 ທ່ານ ນາງ ມະນີສຸກ ໄຊຍະວົງສາ ຄະນະບໍລິຫານງານ ສວ-ບກລ ໄດ້ເຂົ້າຮ່ວມການສຳມະນາແບບທາງໄກກັບ IFAC ແລະ ກຸ່ມ Jeju (IFAC&Jeju Group Webinar) ໃນຫົວຂໍ້ການລາຍງານ ແລະ ຮັບປະກັນຄວາມຍືນຍົງຂອງຂໍ້ມູນ(Reporting and Assurance of Sustain - ability Information);
- ວັນທີ 21 ກັນຍາ 2022 ທ່ານ ກອງປະຊາ ແສງສຸລິວົງ ຄະນະກຳມະການສຶກສາຂອງ ສວ-ບກລ ໄດ້ເຂົ້າຮ່ວມການສຳມະນາແບບທາງໄກກັບ (IFAC&A4S Webinar);
- ວັນທີ 26-28 ກັນຍາ 2022 ທ່ານ ບຸນເຫຼືອ ດາວວິໄລ ຮອງປະທານ ສວ-ບກລ ແລະ ທ່ານ ກອງປະຊາ ແສງສຸລິວົງ ຄະນະກຳມະການສຶກສາ ສວ-ບກລ ໄດ້ເດີນທາງໄປປະເທດ ຟີລິບປິນ ເພື່ອເຂົ້າຮ່ວມກອງປະຊຸມ ACPACC ທີ່ໄດ້ຈັດແບບເຊີງໜ້າ;
- ວັນທີ 29 ກັນຍາ 2022 ທ່ານ ນາງ ມະນີສຸກ ໄຊຍະວົງສາ ຄະນະບໍລິຫານງານ ສວ-ບກລ ໄດ້ເຂົ້າຮ່ວມການສຳມະນາແບບທາງໄກກັບ IFAC (IFAC-CAPA Webinar) ໃນຫົວຂໍ້ວ່າດ້ວຍການປຶກສາຫາລືກ່ຽວກັບຄວາມຍືນຍົງທົ່ວໂລກຂອງ IFAC ແລະ CAPA (IFAC Global Sustainability Dialogue with CAPA);
- ວັນທີ 15 ພະຈິກ 2022 ເຂົ້າຮ່ວມກອງປະຊຸມກັບ ສະຫະພັນນັກບັນຊີສາກົນ (IFAC) ເພື່ອຟັງການລາຍງານຂໍ້ມູນຂ່າວສານ MG ແລະ ລາຍງານການເງິນ ສຳລັບປີ 2023, ການລາຍງານຈາກປະທານຄະນະກຳມະການກວດກາ, ໂດຍການເຂົ້າຮ່ວມ ທ່ານ ຄຳປິວ ທິບພະວົງພັນ ຮອງປະທານ ສວ-ບກລ ແລະ ພ້ອມດ້ວຍ ທີມງານຂອງ ສວ-ບກລ ຈຳນວນ 3 ທ່ານ;

- ວັນທີ 29  ພະຈິກ 2022 ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ (MoU) ລະຫວ່າງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ແລະ ສະມາຄົມລາສະອາອາຈັກອັງກິດ (ACCA) ທີ່ໂຮງແຮມ ຄຣາວພາຊາ ນະຄອນຫລວງວຽງຈັນ, ຈຸດປະສົງຂອງການເຊັນບົດບັນທຶກຄວາມເຂົ້າໃຈແມ່ນເພື່ອສືບຕໍ່ການຮ່ວມມືທາງດ້ານວິຊາການ.




- ວັນທີ 29 ພະຈິກ 2022 ເຂົ້າຮ່ວມກອງປະຊຸມກັບ ສະຫະພັນນັກບັນຊີອາຊຽນ (AFA) ຄັ້ງທີ່ 135 ທີ່ໄທເປັນເຈົ້າພາບ ໂດຍການເຂົ້າຮ່ວມ ທ່ານ ສອນໄຊ ສີລາເພັດ ປະທານ ສວ-ບກລ ແລະ ພະນັກງານ ສວ-ບກລ ຈຳນວນ 3 ທ່ານ.
- ໃນວັນທີ 09 ທັນວາ 2022 ໄດ້ເຂົ້າຮ່ວມປຶກສາຫາລື ກ່ຽວກັບການກະກຽມຈັດກອງປະຊຸມ AFA ຄັ້ງທີ່ 136, ໂດຍມີປະທານ ແລະ ຮອງປະທານ ພ້ອມດ້ວຍທີມງານຂອງ ສວ-ບກລ ເຂົ້າຮ່ວມ;

2.3.5 ວຽກບໍລິຫານ ແລະ ການເງິນ

ໃນປີ 2022 ໄດ້ນຳໃຊ້ໂປຣແກມບັນຊີ  ເພື່ອເກັບກຳບັນດາລາຍການເຄື່ອນໄຫວໃຫ້ຄົບຖ້ວນ, ຖືກຕ້ອງ ແລະ ໂປ່ງໃສ ໂດຍໄດ້ມີການສ້າງເອກະສານລາຍງານການເງິນປະຈຳເດືອນ ແລະ ປະຈຳປີ ແລະ ໃຫ້ມີການກວດສອບຈາກພາຍນອກ.

- ແຫຼ່ງລາຍຮັບຕົ້ນຕໍແມ່ນໄດ້ມາຈາກການຝຶກອົບຮົມນັກຊ່ຽວຊານບັນຊີລາວ, ລາຍຮັບຈາກຄ່າບຳລຸງສະມາຊິກບຸກຄົນ ແລະ ສະມາຊິກນິຕິບຸກຄົນ, ລາຍຮັບຈາກການຝຶກອົບຮົມຍົກລະດັບດ້ານວິຊາຊີບໃຫ້ແກ່ສະມາຊິກ ແລະ ພາກສ່ວນພາຍນອກທີ່ສົນໃຈ, ລາຍຮັບຈາກການສະໜັບສະໜູນກອງປະຊຸມຈາກສະມາຊິກ ສວ-ບກລ ແລະ ພາກສ່ວນອື່ນໆ;
- ລາຍຈ່າຍຕົ້ນຕໍແມ່ນລາຍຈ່າຍສຳລັບການຝຶກອົບຮົມນັກຊ່ຽວຊານບັນຊີລາວ, ລາຍຈ່າຍບໍລິຫານຫ້ອງການເປັນຕົ້ນແມ່ນຄ່າເຊົ່າຫ້ອງການ, ຄ່າເຊົ່າສະຖານທີ່ຝຶກອົບຮົມ, ລາຍຈ່າຍຄ່າຕອບແທນພະນັກງານ (ເງິນເດືອນ), ປະກັນສັງຄົມ, ລາຍຈ່າຍຄ່າບຳລຸງສະມາ ຊິກສະຫະພັນນັກບັນຊີອາຊຽນ ແລະ ຈ່າຍຄ່າບຳລຸງສະມາຊິກສະຫະພັນນັກບັນຊີສາກົນ, ລາຍຈ່າຍຄ່າບໍລິການກວດສອບບັນຊີ ແລະ ລາຍຈ່າຍສຳລັບກອງປະຊຸມພາຍໃນ ແລະ ຕ່າງປະເທດ, ລາຍຈ່າຍຊື້ອຸປະກອນຮັບໃຊ້ຫ້ອງການ, ລາຍຈ່າຍສຳລັບທີ່ປຶກສາທາງ

ດ້ານວິຊາການເຊັ່ນ: ຄ່າເບ້ຍລ້ຽງ, ການເດີນທາງ ແລະ ທີ່ພັກອາໄສ. ນອກຈາກນີ້, ຍັງມີຄ່າໃຊ້ຈ່າຍສະໜັບສະໜູນກົມຄຸ້ມຄອງການບັນຊີ ກະຊວງການເງິນ.

# III. ຂໍ້ສະດວກ, ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້

### 3.1 ຂໍ້ສະດວກ

- ຍ້ອນໄດ້ຮັບການຊີ້ນຳ ນຳພາຈາກກົມຄຸ້ມຄອງການບັນຊີ ກະຊວງການເງິນ ຢ່າງໃກ້ຊິດ ຈຶ່ງເຮັດໃຫ້ການເຄື່ອນໄຫວກິດຈະກຳຂອງ ສວ-ບກລ ໂດຍສ່ວນໃຫຍ່ສາມາດດຳເນີນໄດ້ຕາມແຜນທີ່ວາງໄວ້;
- ຍ້ອນຄວາມຮັບຜິດຊອບຂອງປະທານ, ຮອງປະທານ, ຄະນະບໍລິຫານງານ, ຄະນະກຳມະການຕ່າງໆ ແລະ ພະນັກງານຂອງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຈຶ່ງສາມາດຈັດຕັ້ງປະຕິບັດການຝຶກງານສຳເລັດຕາມຄາດໝາຍ;

### 3.2 ຂໍ້ຄົງຄ້າງ

- ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຍັງມີຂໍ້ຈຳກັດດ້ານບຸກຄະລາກອນຮັບໃຊ້ໃນການເຄື່ອນ ໄຫວວຽກງານ ຂອງສວ-ບກລ;
- ຍັງມີບາງບັນຫາ ໃນການປຸກລະດົມສະມາຊິກ ເຂົ້າຮ່ວມໃນການປະຕິບັດພັນທະ ເກັບກຳຊົ່ວໂມງເຂົ້າຝຶກອົບວິຊາຊີບແບບຕໍ່ເນື່ອງ;
- ການຝຶກອົບຮົມຫຼັກສູດນັກຊ່ຽວຊານບັນຊີ ຍັງຂາດຄູຝຶກ ເພື່ອໝູນວຽນກັນ ແລະ ປຶ້ມຕຳລາຂອງຫຼັກສູດນັກຊ່ຽວຊານບັນຊີ ຍັງບໍ່ມີເປັນພາສາລາວ;
- ນິຕິກຳ ເພື່ອຜັນຂະຫຍາຍບາງມາດຕາຂອງກົດໝາຍທີ່ຕິດພັນກັບການເຄື່ອນໄຫວວຽກງານ ແລະ ກົດລະບຽບຂອງຕົນ ເຊັ່ນລະບຽບຄຸ້ມຄອງສະມາຊິກຍັງບໍ່ທັນຄົບຖ້ວນ;
- ຍັງມີຫົວໜ່ວຍວິສາຫະກິດທີ່ໃຫ້ການບໍລິການດ້ານບັນຊີ ແລະ ກວດສອບ ແລະ ນັກວິຊາຊີບການບັນຊີ ແລະ ກວດສອບ ທັງຄົນລາວ ແລະ ຕ່າງປະເທດ ຈຳນວນໜຶ່ງທີ່ຍັງບໍ່ທັນເຫັນຄວາມສຳຄັນໃນການເຂົ້າເປັນສະມາຊິກ ຂອງ ສວ-ບກລ.

### 3.3 ບົດຮຽນທີ່ຖອດຖອນໄດ້

- ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຄວນໄດ້ກຳນົດລະບຽບຕ່າງໆ ກ່ຽວກັບ ການຄຸ້ມຄອງສະມາຊິກໃຫ້ຊັດເຈນ ແລະ ຮັດກຸມຂຶ້ນກ່ວາເກົ່າ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ;
- ຕ້ອງເພີ່ມທະວີໃນການປະສານສົມທົບ ລະຫວ່າງ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ກັບສະມາຊິກໃຫ້ມີຄວາມຕໍ່ເນື່ອງ ແລະ ດີກ່ວາເກົ່າ;

# IV. ທິດທາງແຜນການໃນການປັບປຸງ ປີ 2023

ເພື່ອໃຫ້ບັນລຸຕາມວິໄສທັດຄື: ສ້າງນັກວິຊາຊີບການບັນຊີ ແລະ ນັກກວດສອບ ໃຫ້ມີຄຸນນະພາບ ທີ່ເປັນໜ້າເຊື່ອຖືໄດ້ ສຳລັບຜົນປະໂຫຍດສາທາລະນະ.

**ສວ-ບກລ ມີທິດທາງການດຳເນີນງານໃນຕໍ່ໜ້າດັ່ງນີ້:**

- ສືບຕໍ່ ປັບປຸງກົງຈັກການຈັດຕັ້ງພະນັກງານເພີ່ມເຕີມ, ຊຸກຍູ້ຄະນະກຳມະການຕ່າງໆ ທີ່ຖືກແຕ່ງຕັ້ງໃຫ້ມີຄວາມເຂັ້ມແຂງ;

- ສືບຕໍ່ວຽກງານ ທັນສູ່ມາດຕະຖານສາກົນ ໂດຍການຈັດຕັ້ງປະຕິບັດ 7 ພັນທະການເປັນສະມາຊິກ ຂອງສະຫະພັນນັກບັນຊີສາກົນ ເພື່ອໃຫ້ກາຍເປັນສະມາຊິກສາມັນ ຂອງອົງການຈັດຕັ້ງດັ່ງກ່າວ ໂດຍສ້າງຍຸດທະສາດການພັດທະນາ ສວ-ບກລ ໃຫ້ເຂັ້ມແຂງ ແລະ ເປັນທີ່ຮັບຮູ້ ໃນພາກພື້ນ ແລະ ສາກົນ;
- ສືບຕໍ່ປັບປຸງຫຼັກສູດຝຶກອົບຮົມ ເປັນຕົ້ນແມ່ນຫຼັກສູດຝຶກອົບຮົມແບບຕໍ່ເນື່ອງ ແລະ ປັບປຸງຫຼັກສູດນັກຊ່ຽວຊານບັນຊີ ໃຫ້ມີປຶ້ມຕຳລາເປັນພາສາລາວ;
- ສືບຕໍ່ສ້າງນັກຊ່ຽວຊານບັນຊີ ທີ່ມີຄຸນນະພາບໃຫ້ເພີ່ມຂຶ້ນ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ພ້ອມທັງເພື່ອສາມາດຊ່ວຍພັດທະນາວິຊາຊີບການບັນຊີໃຫ້ຍືນຍົງ ລວມທັງຊ່ວຍເປັນຄູຝຶກ ໃນຫຼັກສູດວິຊາຊີບນັກຊ່ຽວຊານບັນຊີ;
- ສືບຕໍ່ ຮ່ວມມືກັບກົມຄຸ້ມຄອງການບັນຊີ ໃນການກວດກາການເຄື່ອນໄຫວດ້ານຈັນຍາບັນ ແລະ ດ້ານວິຊາຊີບ ຂອງສະມາຊິກນິຕິບຸກຄົນ ຂອງ ສວ-ບກລ, ການວາງແຜນຝຶກອົບຮົມຮ່ວມກັນ ແລະ ການສ້າງ-ປັບປຸງນິຕິກຳ;
- ສືບຕໍ່ຮ່ວມມືກັບຄູ່ຮ່ວມຍຸດທະສາດເຊັ່ນ: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະຖາບັນການທະນາຄານ, ສະຖາບັນການເງິນການບັນຊີ ແລະ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລແຫ່ງຊາດ ເພື່ອແລກປ່ຽນຄູ ອາຈານສອນ ແລະ ແລກປ່ຽນທາງດ້ານເຕັກນິກວິຊາການ.

ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ (03) 2023

**ປະທານສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ**

ທ່ານ ສອນໄຊ ສີລາເພັດ
**Mr. Sonexay SILAPHET**

# ເອກະສານຊ້ອນ

☑ ເອກະສານລາຍງານການເງິນສຳລັບທີ່ສິ້ນສຸດວັນທີ 31 ທັນວາ 2022



# ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

ເອກະສານລາຍງານການເງິນ
ສຳລັບປີການບັນຊີທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022

**ສາລະບານ** **ໜ້າ**

ໃບລາຍງານກ່ຽວກັບຄວາມຮັບຜິດຊອບຂອງຄະນະບໍລິຫານ ຕໍ່ກັບເອກະສານລາຍງານການເງິນ ..........................1 - 2
ໃບລາຍງານການຮັບ ແລະ ການຈ່າຍ ........................................................................................ 3
ໃບລາຍງານຍອດເຫຼືອເງິນ ...................................................................................................... 4
ໃບລາຍງານກະແສເງິນສົດ ...................................................................................................... 5
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ....................................................................... 6 - 15

## ໃບລາຍງານກ່ຽວກັບຄວາມຮັບຜິດຊອບຂອງຄະນະບໍລິຫານ ຕໍ່ກັບເອກະສານລາຍງານການເງິນ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ (ສວ-ບກລ), ຊຶ່ງຜ່ານມາ ກ່ອນວັນທີ 7 ເມສາ 2015 ຮຽກວ່າອົງການຈັດຕັ້ງວິຊາຊີບການບັນຊີລາວ, ເປັນການຈັດຕັ້ງວິຊາຊີບດ້ານບັນຊີ ຂອງຊາດລາວ, ຊຶ່ງຖືກສ້າງຕັ້ງຂຶ້ນ ໃນປີ 1998 ໂດຍກະຊວງການເງິນ ດ້ວຍຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 0722/ກງ ລົງວັນທີ 5 ພຶດສະພາ 1998.

ກິດຈະກຳຫຼັກ ຂອງ ສວ-ບກລ ແມ່ນການຄຸ້ມຄອງສະມາຊິກຂອງຕົນ, ການສະໜອງການຝຶກອົບຮົມ ແລະ ການພັດທະນາວິຊາຊີບ ຂອງສະມາຊິກຕົນ.

ຫ້ອງການຂອງ ສວ-ບກລ ຕັ້ງຢູ່ທີ່ ເຮືອນເລກທີ 349/2, ບ້ານທົ່ງສາງນາງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປນ 3639, ຊຶ່ງເປັນການຈັດຕັ້ງ ແລະ ຖືກສ້າງຂຶ້ນ ພາຍໃຕ້ລະບຽບກົດໝາຍ ຂອງ ສປປ ລາວ.

ຄະນະບໍລິຫານ ຂອງ ສວ-ບກລ ມີຄວາມຮັບຜິດຊອບຕໍ່ການສ້າງເອກະສານລາຍງານການເງິນ ຊຶ່ງປະກອບມີໃບລາຍງານການຮັບ-ການຈ່າຍ, ໃບດຸ່ນດ່ຽງ, ໃບລາຍງານກະແສເງິນສົດ ພ້ອມດ້ວຍບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ສຳລັບປີການບັນຊີທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022 (ເອກະສານລາຍງານການເງິນ).

ເອກະສານລາຍງານການເງິນສະບັບນີ້ ຖືກສ້າງຂຶ້ນ ເພື່ອລາຍງານກ່ຽວກັບກອງທຶນ ທີ່ໄດ້ຮັບຈາກການເກັບຄ່າສະມາຊິກ ແລະ ຄ່າບຳລຸງປະຈຳປີ, ຄ່າຝຶກອົບຮົມ ແລະ ລາຍຮັບອື່ນໆ ພ້ອມທັງ ລາຍຈ່າຍຂອງກອງທຶນ ສຳລັບປີການບັນຊີທີ່ສິ້ນສຸດໃນວັນທີ 31 ທັນວາ *2022* ແລະ ໃບດຸ່ນດ່ຽງຂອງກອງທຶນ ຄັ້ງວັນທີ 31 ທັນວາ 2022.

ໃນການສ້າງເອກະສານລາຍງານການເງິນສະບັບນີ້, ຄະນະບໍລິຫານ ສວ-ບກລ ໄດ້ຖືກມອບໝາຍໃຫ້:

- ຄັດເລືອກເອົານະໂຍບາຍການບັນຊີທີ່ສອດຄ່ອງ ແລະ ຈາກນັ້ນ ກໍຈັດຕັ້ງປະຕິບັດ ຢ່າງສະໝໍ່າສະເໝີປາຍ ຕາມເງື່ອນໄຂການນຳສະເໜີ ແລະ ການເປີດເຜີຍ. ນະໂຍບາຍການບັນຊີ ທີ່ຄະນະບໍລິຫານ ຂອງ ສວ-ບກລ ໄດ້ຮັບຮອງເອົາ ສຳລັບການສ້າງເອກະສານລາຍງານການເງິນ ຂອງ ສວ-ບກລ ໄດ້ຖືກກຳນົດໃນບົດອະທິບາຍຊ້ອນທ້າຍທີ 3 ຂອງເອກະສານລາຍງານການເງິນ;
- ວິນິໄສ ແລະ ຄາດຄະເນຕົວເລກປະຕິບັດ ແບບສົມເຫດສົມຜົນ ແລະ ຢ່າງລະມັດລະວັງ;
- ເຮັດໃຫ້ມີການດຳເນີນງານ ແລະ ການຄວບຄຸມ ດ້ານການເງິນ ຢ່າງເໝາະສົມ;
- ຮັກສາຄວາມຖືກຕ້ອງຂອງໂຄງສ້າງການຄຸ້ມຄອງ ແລະ ສະພາບແວດລ້ອມການຄວບຄຸມທົ່ວໄປ; ແລະ
- ຮັບປະກັນວ່າຊັບສິນທົ່ວໄປທັງໝົດ ຖືກນຳໃຊ້ພຽງແຕ່ສຳລັບ ແລະ ໂດຍ ສວ-ບກລ, ແລະ ມີການຄວບຄຸມຕໍ່ຊັບສິນດັ່ງກ່າວຢ່າງເໝາະສົມ.

ຄະນະບໍລິຫານ ສວ-ບກລ ຢືນຢັນວ່າ ຕົນໄດ້ປະຕິບັດສອດຄ່ອງກັບເງື່ອນໄຂທີ່ກ່າວມາຂ້າງເທິງ ໃນການສ້າງເອກະສານລາຍງານການເງິນ.
ຄະນະບໍລິຫານ ສວ-ບກລ ຮັບຜິດຊອບ ໃຫ້ມີການຈົດກາຍບັນຊີໃຫ້ຖືກຕ້ອງ ແລະ ສາມາດເປີດເຜີຍກ່ຽວກັບເງິນທີ່ໄດ້ຮັບອະນຸມັດ, ທີ່ໄດ້ຮັບ ແລະ ໄດ້ຈ່າຍ ໂດຍ ສວ-ບກລ ດ້ວຍຄວາມຖືກຕ້ອງແບບສົມເຫດສົມຜົນ ໃນທຸກເວລາ ແລະ ເພື່ອຮັບປະກັນວ່າ ການຈົດກາຍບັນຊີສອດຄ່ອງກັບນະໂຍບາຍການບັນຊີ ທີ່ໄດ້ກຳນົດໃນບົດອະທິບາຍຊ້ອນທ້າຍທີ 3 ຂອງເອກະສານລາຍງານການເງິນ.

ຄະນະບໍລິຫານ ສວ-ບກລ ຍັງຮັບຜິດຊອບກ່ຽວກັບການຮັກສາຊັບສິນ ຂອງ ສວ-ບກລ, ແລະ ການນຳໃຊ້ຂັ້ນຕອນດຳເນີນການທີ່ສົມເຫດສົມຜົນ ໃນການປ້ອງກັນ ແລະ ກວດຈັບ ການສໍ້ໂກງ ແລະ ສິ່ງຜິດປົກກະຕິອື່ນໆ.

## ການຮັບຮອງເອກະສານລາຍງານການເງິນ

ພວກຂ້າພະເຈົ້າ ຂໍຮັບຮອງເອົາເອກະສານລາຍງານການເງິນ ຂອງ ສວ-ບກລ ສໍາລັບປີການບັນຊີທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022 ທີ່ຄັດຕິດມາພ້ອມນີ້, ຊຶ່ງຖືກສ້າງຂຶ້ນ, ດ້ວຍການປະຕິບັດຕາມນະໂຍບາຍການບັນຊີ ທີ່ໄດ້ກໍານົດໃນບົດອະທິບາຍຊ້ອນທ້າຍທີ 3 ຂອງເອກະສານລາຍງານການເງິນສະບັບນີ້.

ໃນນາມຄະນະບໍລິຫານ ຂອງ ສວ-ບກລ:

ທ່ານ ສອນໄຊ ສີລາເພັດ
ປະທານ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ

23 ມີນາ 2023

ທ່ານ ນ. ປ້ອນ ສີສົງຄາມ
ຫົວໜ້າຫ້ອງການ

## ໃບລາຍງານການຮັບ ແລະ ການຈ່າຍ
## ສຳລັບປີການບັນຊີທີ່ສິ້ນສຸດໃນວັນທີ 31 ທັນວາ 2022

*ສະກຸນເງິນຕາ: ກີບ*

| | *ບົດ* | *ປີສິ້ນສຸດໃນວັນທີ 31 ທັນວາ 2022* | *ປີສິ້ນສຸດໃນວັນທີ 31 ທັນວາ 2021* |
|---|---|---|---|
| ການຮັບ (ລາຍຮັບ) | | | |
| ຄ່າສະມາຊິກ | 4 | 1,246,151,763 | 1,060,114,587 |
| ຄ່າສະໝັກສະມາຊິກໃນປີ | 5 | 17,628,600 | 8,758,014 |
| ຄ່າຝຶກອົບຮົມ | 6 | 2,230,284,000 | 1,151,722,524 |
| ສະໜັບສະໜູນຈາກສະມາຊິກຂອງ ສວ-ບກລ | 7 | 13,950,000 | - |
| ສະໜັບສະໜູນຈາກອົງການຈັດຕັ້ງອື່ນໆ | | 19,300,000 | - |
| ລາຍຮັບອື່ນໆ | | 250,089 | - |
| ລາຍຮັບດອກເບ້ຍ | | 23,035,684 | 4,258,243 |
| ກຳໄລ/ຂາດທຶນ ຈາກການແລກປ່ຽນເງິນຕາຕ່າງປະເທດ | | 88,901,569 | 25,589,395 |
| | | **3,639,501,705** | **2,250,442,763** |
| ການຈ່າຍ (ລາຍຈ່າຍ) | | | |
| ຄ່າບໍລິຫານ | 8 | 235,044,167 | 109,627,175 |
| ຄ່າເດີນທາງ | 9 | 65,800,420 | - |
| ຄ່າບຳລຸງສະມາຊິກ AFA | | 25,340,018 | 21,559,900 |
| ຄ່າບຳລຸງສະມາຊິກ IFAC | | 56,845,000 | 46,565,000 |
| ຄ່າເຊົ່າຫ້ອງການ | | 56,310,000 | 46,625,000 |
| ລາຍຈ່າຍກອງປະຊຸມ | 10 | 306,682,740 | 66,831,500 |
| ຄ່າຝຶກອົບຮົມ | 11 | 744,576,777 | 584,952,310 |
| ສະໜັບສະໜູນ ກົມບັນຊີ - ກະຊວງການເງິນ | 12 | 39,000,000 | 25,734,000 |
| ອຸປະກອນຮັບໃຊ້ຫ້ອງການ | 13 | 140,707,850 | 45,929,300 |
| ຄ່າແຮງງານພະນັກງານ | 14 | 1,118,906,811 | 844,941,389 |
| ທີ່ປຶກສາທາງດ້ານວິຊາການ | | 89,791,850 | 289,841,054 |
| ລາຍຈ່າຍຄ່າກວດສອບເອກະສານລາຍງານການເງິນ | | 21,400,000 | 22,015,000 |
| ຄ່າບໍລິການທະນາຄານ | | 2,709,944 | 2,109,594 |
| ລາຍຈ່າຍອື່ນໆ | | 55,740,000 | 14,314,000 |
| | | **2,958,855,577** | **2,121,045,222** |
| **ການຮັບສຸດທິ ຈາກການຈ່າຍ** | | **680,646,128** | **129,397,541** |

ບົດອະທິບາຍຊ້ອນທ້າຍທີ່ຄັດຕິດມາ ຊຶ່ງຢູ່ໜ້າທີ 6 ຫາ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້

# ໃບລາຍງານຍອດເຫຼືອເງິນ
## ຄັ້ງວັນທີ 31 ທັນວາ 2022

| | ບົດ | ສິ້ນສຸດໃນວັນທີ 31 ທັນວາ 2022 | ສະກຸນເງິນກາ: ກີບ ສິ້ນສຸດໃນວັນທີ 31 ທັນວາ 2021 |
|---|---|---|---|
| ຍອດເຫຼືອກອງທຶນ | | | |
| ຍອດເຫຼືອກອງທຶນ ຕົ້ນປີ | | 1,546,990,739 | 1,417,593,198 |
| ການຮັບສຸດທິ ຈາກການຈ່າຍ | | 680,646,128 | 129,397,541 |
| ຍອດເຫຼືອກອງທຶນທ້າຍປີ | | 2,227,636,867 | 1,546,990,739 |
| ນຳສະເໜີໂດຍ: | | | |
| ຊັບສິນ | | | |
| ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ | 15 | 2,227,636,867 | 1,546,990,739 |
| ລວມຍອດຊັບສິນ | | **2,227,636,867** | **1,546,990,739** |

ບົດອະທິບາຍຊ້ອນທ້າຍທີ່ຄັດຕິດມາ ຊຶ່ງຢູ່ໜ້າທີ 6 ຫາ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້

ໃບລາຍງານກະແສເງິນສົດ
ສຳລັບປີການບັນຊີທີ່ສິ້ນສຸດໃນວັນທີ **31** ທັນວາ **2022**

| | ບົດ | ສິ້ນສຸດໃນວັນທີ 31 ທັນວາ 2022 | ສະກຸນເງິນກາ: ກີບ ສິ້ນສຸດໃນວັນທີ 31 ທັນວາ 2021 |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳດຳເນີນງານ** | | | |
| ການຮັບສຸດທິ ຈາກການຈ່າຍໃນປີ | | 680,646,128 | 129,397,541 |
| *ການປັບປຸງສຳລັບ:* | | | |
| ໜີ້ຕ້ອງຮັບ | | - | - |
| ລາຍຈ່າຍລ່ວງໜ້າ | | - | - |
| **ສ່ວນຫຼຸດ/ສ່ວນເກີນດ້ານການດຳເນີນງານ ກ່ອນການເຄື່ອນຍ້າຍທຶນໝູນວຽນ** | | **680,646,128** | **129,397,541** |
| ການເພີ່ມຂຶ້ນສຸດທິ ຂອງເງິນສົດ ແລະ ສິ່ງທຽບເທົ່າເງິນສົດ | | 680,646,128 | 129,397,541 |
| ເງິນສົດ ແລະ ສິ່ງທຽບເທົ່າເງິນສົດຕົ້ນປີ | | 1,546,990,739 | 1,417,593,198 |
| ເງິນສົດ ແລະ ສິ່ງທຽບເທົ່າເງິນສົດທ້າຍປີ | **15** | **2,227,636,867** | **1,546,990,739** |

ບົດອະທິບາຍຊ້ອນທ້າຍທີ່ຄັດຕິດມາ ຊຶ່ງຢູ່ໜ້າທີ 6 ຫາ 15 ເປັນສ່ວນໜຶ່ງຂອງເອກະສານລາຍງານການເງິນສະບັບນີ້.

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ
## ສຳລັບປີການບັນຊີທີ່ສິ້ນສຸດໃນວັນທີ 31 ທັນວາ 2022

### 1. ປະຫວັດຄວາມເປັນມາ

ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ (ສວ-ບກລ), ຊຶ່ງຜ່ານມາ ກ່ອນວັນທີ 7 ເມສາ 2015 ຮຽກວ່າອົງການຈັດຕັ້ງວິຊາຊີບການບັນຊີລາວ, ເປັນການຈັດຕັ້ງວິຊາຊີບດ້ານບັນຊີ ຂອງຊາດລາວ, ຊຶ່ງຖືກສ້າງຕັ້ງຂຶ້ນ ໃນປີ 1998 ໂດຍກະຊວງການເງິນ ດ້ວຍຂໍ້ຕົກລົງຂອງ ລັດຖະມົນຕີກະຊວງການເງິນ ສະບັບເລກທີ 0722/ກງ ລົງວັນທີ 5 ພຶດສະພາ 1998.

ກິດຈະກຳຫຼັກ ຂອງ ສວ-ບກລ ແມ່ນການຄຸ້ມຄອງສະມາຊິກຂອງຕົນ, ການສະໜອງການຝຶກອົບຮົມ ແລະ ການພັດທະນາວິຊາຊີບ ຂອງສະມາຊິກຕົນ.

ຫ້ອງການຂອງ ສວ-ບກລ ຕັ້ງຢູ່ທີ່ ເຮືອນເລກທີ 349/2, ບ້ານທົ່ງສາງນາງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປນ 3639, ຊຶ່ງເປັນການຈັດຕັ້ງ ແລະ ຖືກສ້າງຂຶ້ນ ພາຍໃຕ້ລະບຽບກົດໝາຍ ຂອງ ສປປ ລາວ.

### 2. ພື້ນຖານການສ້າງເອກະສານລາຍງານການເງິນ

ເອກະສານລາຍງານການເງິນ ຂອງ ສວບກລ ປະກອບມີ ໃບລາຍງານການຮັບແລະການຈ່າຍ, ໃບລາຍງານຍອດເຫຼືອເງິນ ແລະ ໃບລາຍງານກະແສເງິນສົດເປັນສະກຸນເງິນກີບ ("LAK"). ເອກະສານລາຍງານການເງິນສະບັບນີ້ ສ້າງຂຶ້ນໂດຍຄະນະບໍລິຫານ ສວ-ບກລ ຕາມນະໂຍບາຍການບັນຊີ ໃນບົດອະທິບາຍຊ້ອນທ້າຍ 3.

ເອກະສານລາຍງານການເງິນ ຖືກສ້າງຂຶ້ນເພື່ອການລາຍງານກ່ຽວກັບລາຍການລຸ່ມນີ້ ເທົ່ານັ້ນ:

a. ລາຍຮັບຈາກຄ່າຈົດທະບຽນສະມາຊິກ, ຄ່າບຳລຸງສະມາຊິກປະຈຳປີ, ຄ່າຝຶກອົບຮົມ ແລະ ຄ່າອື່ນໆທີ່ໄດ້ຮັບຈາກສະມາຊິກ;
b. ລາຍຈ່າຍ ຂອງ ສວ-ບກລ;
c. ຍອດເຫຼືອເງິນ ຂອງ ສວ-ບກລ; ແລະ
d. ກະແສເງິນສົດ ຂອງ ສວ-ບກລ.

ເອກະສານລາຍງານການເງິນສະບັບນີ້ມີຈຸດປະສົງສ້າງຂຶ້ນມາ ເພື່ອເປັນການໃຫ້ຂໍ້ມູນຂ່າວສານ ແລະ ເພື່ອການນຳໃຊ້ຂອງຄະນະບໍລິຫານ ຂອງ ສວ-ບກລ, ລັດຖະບານ ແຫ່ງ ສປປ ລາວ, ສະມາຊິກ ແລະ ຈະບໍ່ເຜີຍແຜ່ໃຫ້ພາກສ່ວນອື່ນໆ.

*ປີການບັນຊີ*

ປີການບັນຊີ ທີ່ນຳໃຊ້ສຳລັບການສ້າງເອກະສານລາຍງານການເງິນ ແມ່ນເລີ່ມຕົ້ນແຕ່ວັນທີ 1 ມັງກອນ ຈົນເຖິງ ວັນທີ 31 ທັນວາ.

### 3. ສະຫຼຸບກ່ຽວກັບນະໂຍບາຍການບັນຊີທີ່ສຳຄັນ

*ຄ່າຈົດທະບຽນສະມາຊິກ*

ຄ່າຈົດທະບຽນສະມາຊິກ ຖືກຮັບຮູ້ລາຍການບັນຊີ ເມື່ອມີການຮັບເງິນສົດ ຫຼື ຈົດມີ ໃນບັນຊີທະນາຄານຂອງ ສວ-ບກລ.

**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)**
**ສຳລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022**

**3. ສະຫຼຸບກ່ຽວກັບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)**

*ຄ່າບຳລຸງປະຈຳປີ ຂອງສະມາຊິກ*

ຄ່າບຳລຸງປະຈຳປີຂອງສະມາຊິກ ຖືກຮັບຮູ້ລາຍການບັນຊີ ເມື່ອມີການຮັບເງິນສົດ ຫຼື ຈົດມີ ໃນບັນຊີທະນາຄານຂອງ ສອ-ບກລ.

*ຄ່າຝຶກອົບຮົມ*

ຄ່າຝຶກອົບຮົມ ຖືກຮັບຮູ້ລາຍການບັນຊີ ເມື່ອມີການຮັບເງິນສົດ ຫຼື ຈົດມີ ໃນບັນຊີທະນາຄານຂອງ ສອ-ບກລ.

*ລາຍຮັບດອກເບ້ຍ*

ລາຍຮັບດອກເບ້ຍ ຖືກຮັບຮູ້ລາຍການບັນຊີ ເມື່ອມີການຮັບເງິນສົດ ຫຼື ຈົດມີ ໃນບັນຊີທະນາຄານຂອງ ສອ-ບກລ.

*ລາຍຈ່າຍ*

ລາຍຈ່າຍ ຖືກຮັບຮູ້ລາຍການບັນຊີ ເມື່ອເອກະສານຢັ້ງຢືນລາຍການເຄື່ອນໄຫວຂອງ ສອ-ບກລ ຖືກສັ່ງ ແລະ ຖືກຮັບຮອງ ຈາກ ຄະນະບໍລິຫານ ຂອງ ສອ-ບກລ.

*ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ*

ເງິນສົດ ປະກອບມີເງິນສົດໃນກຳມື ແລະ ເງິນສົດໃນທະນາຄານ.

*ເງິນລ່ວງໜ້າ*

ເງິນລ່ວງໜ້າໃຫ້ພະນັກງານ ເພື່ອດຳເນີນກິດຈະກຳຂອງ ສອ-ບກລ ກໍເປັນສ່ວນໜຶ່ງຂອງໃບລາຍງານຍອດເຫຼືອເງິນ ຈົນເຖິງໄດ້ມີການຊຳລະສະສາງ ດ້ວຍການຮັບຮອງຈາກຄະນະບໍລິຫານ ຂອງ ສອ-ບກລ.

*ຊັບສົມບັດຄົງທີ່*

ຊັບສົມບັດຄົງທີ່, ຊຶ່ງລວມມີ ອຸປະກອນ ແລະ ເຟີນີເຈີຂອງຫ້ອງການ ຖືກຮັບຮູ້ລາຍການບັນຊີ ໃນໃບລາຍງານການຮັບການຈ່າຍ ໂດຍອີງຕາມການຊື້. ສະນັ້ນ, ຊັບສົມບັດຄົງທີ່ ບໍ່ໄດ້ຖືກຮັບຮູ້ລາຍການບັນຊີໃບລາຍງານຍອດເຫຼືອເງິນ ໃນທ້າຍປີ. ສອ-ບກລ ມີໃບບັນຊີຕິດຕາມຊັບສົມບັດຄົງທີ່ຕ່າງຫາກ ເພື່ອຈຸດປະສົງໃນການຄວບຄຸມ ແລະ ຕິດຕາມກວດກາເທົ່ານັ້ນ.

*ສ່ວນແຕກຕ່າງຈາກການແລກປ່ຽນເງິນຕາຕ່າງປະເທດ*

ການເບີກຈ່າຍ ແລະ ການຖອນເງິນຕາຕ່າງປະເທດ ທີ່ບໍ່ແມ່ນເງິນກີບ ຖືກປ່ຽນຄ່າເປັນເງິນກີບ ໃນອັດຕາແລກປ່ຽນໃນມື້ ທີ່ມີລາຍການເຄື່ອນໄຫວ. ລາຍການທີ່ເປັນເງິນ ສະກຸນເງິນຕາຕ່າງປະເທດ ຖືກປ່ຽນຄ່າເປັນເງິນກີບ ໃນອັດຕາແລກປ່ຽນໃນມື້ລາຍງານ. ສ່ວນແຕກຕ່າງຈາກການແລກປ່ຽນເງິນຕາຕ່າງປະເທດ ຖືກສະແດງອອກເປັນສ່ວນໄດ້/(ສ່ວນເສຍ) ສຸດທິຈາກການແລກປ່ຽນເງິນຕາຕ່າງປະເທດ ໃນໃບລາຍງານການຮັບ ແລະ ການຈ່າຍ.

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
## ສຳລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022

**4.** ຄ່າບຳລຸງປະຈຳປີ ຂອງສະມາຊິກ

*ສະກຸນເງິນຕາ: ກີບ*

| | *ປີສິ້ນສຸດໃນວັນທີ 31 ທັນວາ 2022* | *ປີສິ້ນສຸດໃນວັນທີ 31 ທັນວາ 2021* |
|---|---|---|
| ສະມາຊິກສາມັນ | | |
| ສະມາຊິກສາມັນ ບຸກຄົນ | 45,850,000 | 43,207,000 |
| ສະມາຊິກສາມັນ ນິຕິບຸກຄົນ | 283,649,193 | 224,987,405 |
| | **329,499,193** | **268,194,405** |
| ສະມາຊິກສະໜັບສະໜູນ | | |
| ສະມາຊິກສະໜັບສະໜູນ ບຸກຄົນປະກອບອາຊີບ | 156,629,150 | 65,773,000 |
| ສະມາຊິກສະໜັບສະໜູນ ນິຕິບຸກຄົນ | 751,423,420 | 722,647,182 |
| ສະມາຊິກສະໜັບສະໜູນ ບຸກຄົນອື່ນ | 8,600,000 | 3,500,000 |
| | **916,652,570** | **791,920,182** |
| | **1,246,151,763** | **1,060,114,587** |

**5.** ຄ່າຈົດທະບຽນເປັນສະມາຊິກ

*ສະກຸນເງິນຕາ: ກີບ*

| | *ປີສິ້ນສຸດໃນວັນທີ 31 ທັນວາ 2022* | *ປີສິ້ນສຸດໃນວັນທີ 31 ທັນວາ 2021* |
|---|---|---|
| ສະມາຊິກສາມັນ | | |
| ສະມາຊິກສາມັນ ບຸກຄົນ | 6,750,000 | 3,750,000 |
| ສະມາຊິກສາມັນ ນິຕິບຸກຄົນ | 4,500,000 | 3,508,014 |
| | **11,250,000** | **7,258,014** |
| ສະມາຊິກສະໜັບສະໜູນ | | |
| ສະມາຊິກສະໜັບສະໜູນ ບຸກຄົນປະກອບອາຊີບ | 3,228,600 | - |
| ສະມາຊິກສະໜັບສະໜູນ ບຸກຄົນອື່ນ | 3,150,000 | 1,500,000 |
| | **6,378,600** | **1,500,000** |
| | **17,628,600** | **8,758,014** |

**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)**
**ສໍາລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022**

**6. ຄ່າຝຶກອົບຮົມ**

| | ປີສິ້ນສຸດໃນວັນທີ 31 ທັນວາ 2022 | ສະກຸນເງິນຕາ: ກີບ<br>ປີສິ້ນສຸດໃນວັນທີ 31 ທັນວາ 2021 |
|---|---|---|
| 6.1 ການຝຶກອົບຮົມແບບຕໍ່ເນື່ອງ (CPD) | 136,360,000 | 211,200,000 |
| 6.2 ວິຊາຊີບຊ່ຽວຊານບັນຊີ | | |
| 6.2.1 ວິຊາຊີບຊ່ຽວຊານບັນຊີລຸ້ນທີ 12 | - | 16,000,000 |
| 6.2.2 ວິຊາຊີບຊ່ຽວຊານບັນຊີລຸ້ນທີ 13 | 32,800,000 | 107,500,000 |
| 6.2.3 ວິຊາຊີບຊ່ຽວຊານບັນຊີລຸ້ນທີ 14 | 235,600,000 | 196,300,208 |
| 6.2.4 ວິຊາຊີບຊ່ຽວຊານບັນຊີລຸ້ນທີ 15 | 159,600,000 | 155,500,000 |
| 6.2.5 ວິຊາຊີບຊ່ຽວຊານບັນຊີລຸ້ນທີ 16 | 166,100,000 | 376,850,000 |
| 6.2.6 ວິຊາຊີບຊ່ຽວຊານບັນຊີລຸ້ນທີ 17 | 711,800,000 | - |
| 6.2.7 ຄ່າລົງທະບຽນເສັງຄືນ | 78,280,000 | 37,320,316 |
| 6.2.8 ລາຍຮັບອື່ນໆ ສໍາລັບຝຶກອົບຮົມວິຊາຊີບຊ່ຽວຊານບັນຊີ | 37,350,000 | - |
| 6.3 ສອບເສັງທົດສອບຄວາມສາມາດທາງດ້ານກົດໝາຍໃຫ້ CPA ຕ່າງປະເທດ ເພື່ອເປັນ CPA ລາວ | 97,049,000 | 51,052,000 |
| 6.4 ລາຍຮັບໃນການຝຶກງານເປັນນັກຊ່ຽວຊານບັນຊີ ແລະ ກວດສອບ | 351,100,000 | - |
| 6.5 ລາຍຮັບໃນການຍົກເວັ້ນວິຊາຮຽນວິຊາຊີບຊ່ຽວບັນຊີ | 26,400,000 | - |
| 6.6 ລາຍຮັບການຝຶກອົບຮົມຫົວຂໍ້ພິເສດ | 197,845,000 | - |
| | **2,230,284,000** | **1,151,722,524** |

**7. ສະໜັບສະໜູນຈາກສະມາຊິກຂອງ ສອ-ບກລ**

| | ປີສິ້ນສຸດໃນວັນທີ 31 ທັນວາ 2022 | ສະກຸນເງິນຕາ:ກີບ<br>ປີສິ້ນສຸດໃນວັນທີ 31 ທັນວາ 2021 |
|---|---|---|
| lcpaa/1-2-00040 SPK Co.,Ltd | 1,000,000 | - |
| lcpaa/1-2-20-00084 Praseuth Business Service Sole co., Ltd | 500,000 | - |
| lcpaa/1-2-00056 SKNP Co.,LTD | 500,000 | - |
| lcpaa/1-2-00028 Accuracy Accounting Consultancy & Auditing Services Co., LTD | 500,000 | - |

**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)**
**ສຳລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022**

**7. ສະໜັບສະໜູນຈາກສະມາຊິກຂອງ ສອ-ບກລ (ຕໍ່)**

| | *ປີສິ້ນສຸດໃນວັນທີ 31 ທັນວາ 2022* | *ສະກຸນເງິນຕາ:ກີບ ປີສິ້ນສຸດໃນວັນທີ 31 ທັນວາ 2021* |
|---|---|---|
| lcpaa/1-2-00036 SP Accounting Consultancy - Auditing and Investment Consultancy Co.,LTD | 1,000,000 | - |
| lcpaa/1-2-00024 Accounting Service and Business Consultancy Sole Co.LTD | 500,000 | - |
| lcpaa/1-2-00058 A2Z Sole Co.,LTD | 1,000,000 | - |
| lcpaa/1-2-00012 Accounting & Consultancy Service Co.,LTD | 2,000,000 | - |
| lcpaa/1-2-00039 KSB Accounting Services Limited | 500,000 | - |
| lcpaa/2-2-00006 Ernst & Young Lao Co., Ltd | 1,000,000 | - |
| lcpaa/1-2-20-00086 PICK Jaleansup Service Co., Ltd | 1,000,000 | - |
| lcpaa/1-2-20-00090 INDOCHINE ACCOUNTING AND AUDITING CONSULTANCY SOLE CO., LTD | 300,000 | - |
| lcpaa/1-2-00026 Lao Accounting Service and Auditing Sole Co.,LTD | 500,000 | - |
| lcpaa/1-2-00057 NTA Co .,LTD | 500,000 | - |
| lcpaa/2-2-00001 VDB Loi Co.,LTD | 1,000,000 | - |
| Individual Member | 2,150,000 | - |
| **Total** | **13,950,000** | **-** |

**8. ລາຍຈ່າຍບໍລິຫານ**

| | *ສິ້ນສຸດໃນວັນທີ 31 ທັນວາ 2022* | *ສະກຸນເງິນຕາ: ກີບ ສິ້ນສຸດໃນວັນທີ 31 ທັນວາ 2021* |
|---|---|---|
| ຄ່າໂຄສະນາ | 8,912,000 | 2,375,000 |
| ການສ້າງເວັບໄຊທ໌ | 3,436,200 | 9,361,481 |
| ບຳລຸງສ້ອມແປງຫ້ອງການ | 16,546,000 | 13,854,000 |
| ອຸປະກອນເຄື່ອງໃຊ້ຫ້ອງການ | 45,697,000 | 26,500,000 |
| ໄຟຟ້າ, ນ້ຳປະປາ, ຄ່າຂີ້ເຫຍື້ອ | 10,701,500 | 5,457,500 |
| ໂທລະສັບ ແລະ ອິນເຕີເນັດ | 26,374,500 | 14,207,500 |
| ບັນເທີງ/ຮັບແຂກ | 31,808,000 | - |
| ຄ່ານ້ຳມັນລົດ | 32,944,500 | 15,866,000 |
| ຄ່າທຳນຽມ | 25,690,289 | - |
| ອື່ນໆ | 32,934,178 | 22,005,694 |

| | | |
|---|---|---|
| | **235,044,167** | **109,627,175** |

## ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
## ສຳລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022

**9.** ລາຍຈ່າຍເດີນທາງ

| | *ສິ້ນສຸດໃນວັນທີ* *31 ທັນວາ 2022* | *ສະກຸນເງິນກາ: ກີບ* *ສິ້ນສຸດໃນວັນທີ* *31 ທັນວາ 2022* |
|---|---|---|
| ຄ່າກິນ ເງິນແຮ | 4,862,100 | - |
| ໂຮງແຮມ-ບ່ອນພັກເຊົາ | 32,414,000 | - |
| ປີ້ຍົນ | 28,524,320 | - |
| | **65,800,420** | - |

**10.** ລາຍຈ່າຍກອງປະຊຸມ

| | *ສິ້ນສຸດໃນວັນທີ* *31 ທັນວາ 2022* | *ສະກຸນເງິນກາ: ກີບ* *ສິ້ນສຸດໃນວັນທີ* *31 ທັນວາ 2022* |
|---|---|---|
| ກອງປະຊຸມ ຄະນະກຳມະການ ແລະ ຄະນະບໍລິຫານ | 35,285,000 | 34,221,500 |
| ກອງປະຊຸມໃຫຍ່ປະຈຳປີ | 23,393,000 | - |
| ສວ-ບກລ ຮ່ວມກັບ ສະຖາບັນການທະນາຄານ | 600,000 | 4,901,000 |
| ສວ-ບກລ ຮ່ວມກັບ ກົມບັນຊີ ກະຊວງການເງິນ | 7,776,000 | 17,590,000 |
| ສວ-ບກລ ຮ່ວມກັບສະຫະພັນນັກບັນຊີສາກົນ LCPAA-IFAC | - | 4,800,000 |
| ສວ-ບກລ ຮ່ວມກັບຄະນະກຳມະການປະສານງານນັກຊ່ຽວຊານບັນຊີອາຊຽນ LCPAA-ACPAC | 300,000 | 300,000 |
| ສວ-ບກລ ຮ່ວມກັບຕະຫຼາດຫຼັກຊັບລາວ LCAA-LSX-IFRS | - | 2,580,000 |
| ສວ-ບກລ ຮ່ວມກັບສະຫະພັນນັກບັນຊີອາຊຽນ LCPAA-AFA | 2,355,000 | 900,000 |
| ສວ-ບກລ ຮ່ວມກັບສະມາຄົມນັກບັນຊີປະເທດອັງກິດ LCPAA-ACCA | 20,554,000 | - |
| ກອງປະຊຸມເລືອກຕັ້ງຄະນະບໍລິຫານງານຊຸດໃຫມ່ຂອງ ສວ-ບກລ | 187,473,000 | - |
| ສວ-ບກລ ຮ່ວມກັບສະຖາບັນການເງິນ-ການບັນຊີ (ດົງຄຳຊ້າງ) | 12,100,000 | - |
| ກອງປະຊຸມກ່ຽວກັບການຝຶກງານເປັນນັກຊ່ຽວຊານບັນຊີ | 6,112,000 | - |
| ພິທີຮັບໃບຢັ້ງຢືນນັກຊ່ຽວຊານບັນຊີ | 3,776,000 | |
| ລາຍຈ່າຍກອງປະຊຸມອື່ນໆ | 6,958,740 | 1,539,000 |
| | **306,682,740** | **66,831,500** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)
**ສຳລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022**

## 11. ລາຍຈ່າຍການຝຶກອົບຮົມ

*ສະກຸນເງິນຕາ: ກີບ*

| | *ສິ້ນສຸດໃນວັນທີ 31 ທັນວາ 2022* | *ສິ້ນສຸດໃນວັນທີ 31 ທັນວາ 2021* |
|---|---|---|
| ນັກຊ່ຽວຊານບັນຊີລຸ້ນທີ 12: | | |
| ຄູຝຶກ-ວິທະຍາກອນ | - | - |
| - ຕຳລາຝຶກອົບຮົມ | - | 310,000 |
| - ການແປເອກະສານ | - | 650,000 |
| - ຄ່າເຊົ່າຫ້ອງຝຶກອົບຮົມ | - | 1,300,000 |
| - ການບໍລິຫານ | - | - |
| - ອື່ນໆ | - | 13,132,000 |
| | **-** | **15,392,000** |
| ນັກຊ່ຽວຊານບັນຊີລຸ້ນທີ 13: | | |
| ຄູຝຶກ-ວິທະຍາກອນ | 1,000,000 | 35,450,000 |
| - ຕຳລາຝຶກອົບຮົມ | - | - |
| - ຄ່າເຊົ່າຫ້ອງຝຶກອົບຮົມ | - | 28,512,000 |
| - ການບໍລິຫານ | - | 4,250,000 |
| - ອື່ນໆ | 18,830,000 | 1,563,000 |
| | **19,830,000** | **69,775,000** |
| ນັກຊ່ຽວຊານບັນຊີລຸ້ນທີ 14: | | |
| ຄູຝຶກ-ວິທະຍາກອນ | 55,050,000 | 72,635,000 |
| - ຄ່າເຊົ່າຫ້ອງຝຶກອົບຮົມ | - | 16,000,000 |
| - ການບໍລິຫານ | 2,500,000 | 2,250,000 |
| - ອື່ນໆ | 300,000 | - |
| | **57,850,000** | **90,885,000** |
| ນັກຊ່ຽວຊານບັນຊີລຸ້ນທີ 15: | | |
| ຄູຝຶກ-ວິທະຍາກອນ | 60,755,000 | 86,785,000 |
| - ຕຳລາຝຶກອົບຮົມ | - | 277,000 |
| - ຄ່າເຊົ່າຫ້ອງຝຶກອົບຮົມ | - | 12,000,000 |
| - ການບໍລິຫານ | 3,600,000 | 2,800,000 |
| - ອື່ນໆ | - | 2,300,000 |
| | **64,355,000** | **104,162,000** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)

**ສຳລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022**

**11.** ລາຍຈ່າຍການຝຶກອົບຮົມ (ຕໍ່)

| | ສະກຸນເງິນຕາ: ກີບ | |
|---|---|---|
| | *ສິ້ນສຸດໃນວັນທີ 31 ທັນວາ 2022* | *ສິ້ນສຸດໃນວັນທີ 31 ທັນວາ 2021* |
| ນັກຊ່ຽວຊານບັນຊີລຸ້ນທີ 16: | | |
| ຄູຝຶກ-ວິທະຍາກອນ | 105,885,000 | 100,765,000 |
| - ຕຳລາຝຶກອົບຮົມ | - | - |
| - ຄ່າແປເອກະສານ | - | 2,310,000 |
| - ຄ່າເຊົ່າຫ້ອງຝຶກອົບຮົມ | - | 35,250,000 |
| - ການບໍລິຫານ | 7,700,000 | 6,050,000 |
| - ອື່ນໆ | - | 13,620,000 |
| | **113,585,000** | **157,995,000** |
| ນັກຊ່ຽວຊານບັນຊີລຸ້ນທີ 17: | | |
| ຄູຝຶກ-ວິທະຍາກອນ | 65,405,000 | - |
| - ຕຳລາຝຶກອົບຮົມ | - | - |
| - ຄ່າແປເອກະສານ | - | - |
| - ຄ່າເຊົ່າຫ້ອງຝຶກອົບຮົມ | - | - |
| - ການບໍລິຫານ | 4,800,000 | - |
| - ອື່ນໆ | 10,803,000 | - |
| | **81,008,000** | **-** |
| **ລາຍຈ່າຍອື່ນໆ ກ່ຽວກັບຝຶກອົບຮົມນັກຊ່ຽວຊານບັນຊີ** | | |
| ລາຍຈ່າຍອື່ນໆ ກ່ຽວກັບຝຶກອົບຮົມນັກຊ່ຽວຊານບັນຊີ | 137,467,250.00 | - |
| | **137,467,250.00** | **-** |
| **ສອບເສັງທົດສອບຄວາມຮູ້ຄວາມສາມາດ** | | |
| ສອບເສັງທົດສອບຄວາມຮູ້ຄວາມສາມາດ | 20,759,880 | 13,455,960 |
| | **20,759,880** | **13,455,960** |
| **ຝຶກອົບຮົມ - ການຍົກລະດັບວິຊາຊີບນັກບັນຊີແບບຕໍ່ເນື່ອງ (CPD)** | | |
| ຝຶກອົບຮົມ - ການຍົກລະດັບວິຊາຊີບນັກບັນຊີແບບຕໍ່ເນື່ອງ (CPD) | 33,974,000 | 106,584,500 |
| **Total** | **33,974,000** | **106,584,500** |
| **ຄ່າໃຊ້ຈ່າຍອື່ນໆໃນການຝຶກອົບຮົມ** | | |
| ຄ່າໃຊ້ຈ່າຍອື່ນໆໃນການຝຶກອົບຮົມ | 4,054,000 | 26,702,850 |
| ຝຶກອົບຮົມໃນຫົວຂໍ້ພິເສດ | 129,071,647 | - |
| ການຝຶກງານເປັນນັກຊ່ຽວຊານບັນຊີ | 7,022,000 | - |
| | **140,147,647** | **26,702,850** |
| **ພັດທະນາຫຼັກສູດຊ່ຽວຊານບັນຊີ** | | |
| ພັດທະນາຫຼັກສູດຊ່ຽວຊານບັນຊີ | 75,600,000 | - |
| | **75,600,000** | **-** |
| **ລາຍຈ່າຍຝຶກອົບຮົມທັງໝົດ** | **744,576,777** | **584,952,310** |

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)

ສໍາລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022

## 12. ສະໜັບສະໜູນ ກົມບັນຊີ - ກະຊວງການເງິນ

| | | ສະກຸນເງິນຕາ: ກີບ |
|---|---|---|
| | *ສິ້ນສຸດໃນວັນທີ* | *ສິ້ນສຸດໃນວັນທີ* |
| | ***31 ທັນວາ 2022*** | ***31 ທັນວາ 2021*** |
| ສະໜັບສະໜູນ ຄ່າເດີນທາງ | - | - |
| ສະໜັບສະໜູນ ການຝຶກອົບຮົມ/ກອງປະຊຸມ | 26,000,000 | 16,990,000 |
| ອື່ນໆ | 13,000,000 | 8,744,000 |
| | **39,000,000** | **25,734,000** |

## 13. ອຸປະກອນຮັບໃຊ້ຫ້ອງການ

| | | ສະກຸນເງິນຕາ: ກີບ |
|---|---|---|
| | *ສິ້ນສຸດໃນວັນທີ* | *ສິ້ນສຸດໃນວັນທີ* |
| | ***31 ທັນວາ 2022*** | ***31 ທັນວາ 2021*** |
| ຊື້ຄອມພິວເຕີ ໂນດບຸກ | 94,240,250 | 28,383,300 |
| ຊື້ເຄື່ອງພິມເອກະສານ ແລະ ສ້ອມແປງເຄື່ອງພິມເອກະສານ | 13,054,000 | - |
| ຊື້ເຄື່ອງ furniture | 10,795,000 | 5,110,000 |
| ຊື້ຕູ້ໃສ່ເອກະສານ | 1,240,000 | 6,390,000 |
| ລົດຮັບໃຊ້ຫ້ອງການ | - | - |
| ຊື້ໂທລະສັບຮັບໃຊ້ຫ້ອງການ | - | 2,199,000 |
| ຊື້ Battery Computer | - | 790,000 |
| ລະບົບບັນຊີ | - | 3,057,000 |
| ກ້ອງປະຊຸມທາງໄກ | 21,378,600 | - |
| | **140,707,850** | **45,929,300** |

## 14. ຄ່າແຮງງານພະນັກງານ

| | | *ສະກຸນເງິນຕາ: ກີບ* |
|---|---|---|
| | *ສິ້ນສຸດໃນວັນທີ* | *ສິ້ນສຸດໃນວັນທີ* |
| | ***31 ທັນວາ 2022*** | ***31 ທັນວາ 2021*** |
| ເງິນເດືອນ | 838,628,122 | 667,306,982 |
| ອາກອນລາຍໄດ້ | 80,660,579 | 53,969,450 |
| ປະກັນສັງຄົມ | 35,690,250 | 32,085,000 |
| ເງິນເຮັດວຽກລ່ວງເວລາ ແລະ ຜົນປະໂຫຍດອື່ນໆ | 21,000,000 | 27,156,245 |
| ໂບນັດ | 66,358,333 | - |
| ກອງທຶນສະສົມພະນັກງານ | 76,569,527 | 64,423,712 |
| | **1,118,906,811** | **844,941,389** |

## 15. ເງິນສົດ ແລະ ສິ່ງທຽບເທົ່າເງິນສົດ

| | | ສະກຸນເງິນຕາ: ກີບ |
|---|---|---|
| | *ສິ້ນສຸດໃນວັນທີ* | *ສິ້ນສຸດໃນວັນທີ* |
| | ***31 ທັນວາ 2022*** | ***31 ທັນວາ 2021*** |
| ເງິນສົດຢູ່ທະນາຄານ | 2,219,649,867 | 1,541,566,739 |
| ເງິນສົດໃນກໍາມື | 7,987,000 | 5,424,000 |
| | **2,227,636,867** | **1,546,990,739** |

**ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ (ຕໍ່)**
**ສໍາລັບປີການບັນຊີ ທີ່ສິ້ນສຸດ ໃນວັນທີ 31 ທັນວາ 2022**

## 16. ພັນທະທີ່ຕ້ອງໄດ້ຈ່າຍ ຕາມສັນຍາ

| | | ສະກຸນເງິນຕາ: ກີບ |
|---|---|---|
| | *ສິ້ນສຸດໃນວັນທີ* | *ສິ້ນສຸດໃນວັນທີ* |
| | ***31 ທັນວາ 2022*** | ***31 ທັນວາ 2021*** |
| ຄ່າຕອບແທນທີ່ປຶກສາທາງດ້ານວິຊາການ* | 351,320,132 | 130,852,697 |
| | **351,320,132** | **130,852,697** |

*ທີ່ປຶກສາທາງດ້ານວິຊາການ: ອີງຕາມສັນຍາກ່ຽວກັບການໃຫ້ຄວາມຊ່ວຍເຫຼືອທາງດ້ານວິຊາການ ໃນລະຫວ່າງປີ 2021-2022 ລົງວັນທີ: 10 ພະຈິກ 2020 ທີ່ປຶກສາທາງດ້ານວິຊາການ ຈະຊ່ວຍວຽກງານດ້ານການອອກລະບຽບການຕ່າງໆໃຫ້ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໃນນັ້ນ, ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ຕ້ອງໄດ້ຮັບຜິດຊອບຈ່າຍເບ້ຍລ້ຽງໃຫ້ ໂດຍອີງຕາມຈຳນວນມື້ເຮັດວຽກຕົວຈິງທີ່ກຳນົດໃນສັນຍາ.

## 17. ການຮັບຮອງເອກະສານລາຍງານການເງິນ

ເອກະສານລາຍງານການເງິນຂອງ ສວ-ບກລ ສຳລັບປີການບັນຊີທີ່ສິ້ນສຸດໃນວັນທີ 31 ທັນວາ 2022 ຖືກຮັບຮອງ ຕາມການຕົກລົງເຫັນດີ ຂອງຄະນະບໍລິຫານ ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບ ໃນວັນທີ 23 ມີນາ 2023.